ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນຄຸ້ມຄອງນ້ຳໃຕ້ດິນ

# ແຂວງສາລະວັນ 2023-2025

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

2023

# ການຮັບຮອງແຜນຄຸ້ມຄອງນ້ຳໃຕ້ດິນ ແຂວງສາລະວັນ

ແຜນຄຸ້ມຄອງນ້ຳໃຕ້ດິນ ສະບັບນີ້ ແມ່ນເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ ສາລະວັນ (2021-2025) ແລະ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ. ເພື່ອຮັບປະກັນໃຫ້ການຄຸ້ມຄອງຊັບພະຍາກອນທຳມະຊາດ ກໍ່ຄືນ້ຳໃຕ້ດິນໃຫ້ໄປຕາມທິດສີຂຽວ ແລະ ມີຄວາມຍືນຍົງ.

ອີງຕາມຫຼັກການ ການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານທີ່ໄດ້ລະບຸເຖິງຄວາມຈຳເປັນ ໃນການຮ່ວມມືກັນຢ່າງຈິງຈັງລະຫວ່າງພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ, ພາກເອກະຊົນ, ບັນດາຜູ້ພັດທະນາໂຄງການ ເພື່ອທີ່ຈະພ້ອມກັນບັນລຸຈຸດປະສົງການພັດທະນາທີ່ມີຄວາມຍືນຍົງ, ຮັ່ງມີ ແລະ ສະເໝີພາບ ໃນການເຂົ້າເຖິງແຫຼ່ງນ້ຳຂອງປະຊາຊົນບັນດາເຜົ່າ. ດັ່ງນັ້ນ, ພວກເຮົາທຸກຄົນຕ້ອງເອົາໃຈໃສ່ສົ່ງເສີມ ການວາງແຜນຄຸ້ມຄອງນ້ຳໃຕ້ດິນ ແລະ ເພີ່ມຄວາມພະຍາຍາມໃນການໝູນໃຊ້ບົດຮຽນທີ່ດີ ແລະ ຈັດຕັ້ງປະຕິບັດຢ່າງມີປະສິດທິພາບຮັບປະກັນໃຫ້ນ້ຳໃຕ້ດິນມີຄວາມຍືນຍົງ ສາມາດຕອບສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ປະກອບສ່ວນໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນແຂວງສາລະວັນ ໃຫ້ດີຂຶ້ນເທື່ອລະກ້າວ.

ແຜນຄຸ້ມຄອງນ້ຳໃຕ້ດິນ ສະບັບນີ້, ໄດ້ຖືກສ້າງຂຶ້ນດ້ວຍການຮ່ວມມືຂອງບັນດາຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນ ກົມຊັບພະຍາກອນນ້ຳ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ພາຍໃຕ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ໃນແຂວງສາລະວັນ

ພວກຂ້າພະເຈົ້າ ຕາງໜ້າ ແຂວງສາລະວັນ ແລະ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມເປັນເອກະພາບກັນ ໃນການສ້າງແຜນຄຸ້ມຄອງນ້ຳໃຕ້ດິນ ຮ່ວມກັບແຂວງ, ເມືອງ ເພື່ອຮັບຮອງແຜນຄຸ້ມຄອງນ້ຳໃຕ້ດິນສະບັບນີ້ ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ ແລະ ຍາວນານ. ພ້ອມນັ້ນ, ຂໍສະແດງຄວາມຂອບໃຈມາຍັງຄະນະຮັບຜິດຊອບທີ່ໄດ້ສຸມເຫື່ອແຮງ, ສະຕິປັນຍາ ແລະ ຄວາມເປັນເຈົ້າການປະກອບສ່ວນໃນການແບ່ງປັນຄວາມຮູ້ ແລະ ຂໍ້ມູນຂ່າວສານ ໃນການສ້າງແຜນສະບັບນີ້. ພິເສດຂໍສະແດງຄວາມຂອບໃຈມາຍັງຜູ້ໃຫ້ການສະໜັບສະໜູນ ໃນການສ້າງແຜນຄຸ້ມຄອງນ້ຳໃຕ້ດິນສະບັບນີ້ຈົນສຳເລັດ. ເອກະສານ ສະບັບນີ້ແມ່ນເປັນເອກະສານສະບັບຕົ້ນຈະມີການທົບທວນຄືນ ແລະ ປັບປຸງເປັນແຕ່ລະໄລຍະ, ທັງເປັນເອກະສານພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດ.

ທີ່ ແຂວງ ສາລະວັນ, ວັນທີ 28 ສິງຫາ 2023

| | |
|---|---|
| ອົງການປົກຄອງ ແຂວງສາລະວັນ | ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| ເຈົ້າແຂວງ | ລັດຖະມົນຕີ |
| ພູທອງ ຄຳມະນີວົງ | ຈັນທະເນດ ບົວລະພາ |

# ສັງລວມຫຍໍ້

ແຜນຄຸ້ມຄອງນໍ້າໃຕ້ດິນສະບັບນີ້ ສ້າງຂຶ້ນເພື່ອກຳນົດບັນດາແຜນງານ, ຄາດໝາຍ ແລະ ກິດຈະກຳ ອັນລະອຽດ ເພື່ອເປັນບ່ອນອີງ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງໃນການນຳເອົາໄປຈັດຕັ້ງປະຕິບັດ ໂດຍມີການຮ່ວມ ກັບທຸກພາກສ່ວນໃນຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍມີວິໄສທັດດັ່ງນີ້: **"ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນານໍ້າໃຕ້ດິນ ເພື່ອຮັບປະກັນໃຫ້ນໍ້າ ມີຄຸນນະພາບດີ ແລະ ປະລິມານທີ່ພຽງພໍ ຕອບສະໜອງ ໃຫ້ແກ່ການ ພັດທະນາ ແບບຍືນຍົງ ຄຽງຄູ່ກັບການສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນ ແລະ ປັບຕົວເຂົ້າກັບການ ປ່ຽນແປງສະພາບດິນຟ້າອາກາດ"**.

ແຂວງສາລະວັນ ຕັ້ງຢູ່ພາກຕາເວັນອອກສ່ຽງໃຕ້ຂອງ ສປປ ລາວ ຈາກຈຸດພິເສດທາງດ້ານທີ່ຕັ້ງ ແລະ ພູມສັນຖານຂອງແຂວງ ແບ່ງອອກເປັນ 3 ເຂດ ຄື: ເຂດພູດອຍ, ເຂດພູພຽງ ແລະ ເຂດທົ່ງພຽງ ເຊິ່ງແຕ່ລະເຂດຈະມີລັກສະນະຈຸດພິເສດ, ຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແຂວງ ສາລະວັນແມ່ນແຂວງ ໜຶ່ງທີ່ມີທ່າແຮງທາງດ້ານຊັບພະຍາກອນ ທຳມະຊາດ ແລະ ມີແມ່ນໍ້າໄຫຼຜ່ານເປັນຕົ້ນ: ນໍ້າຂອງ, ນໍ້າເຊໂດນ, ນໍ້າເຊບັ້ງນວນ, ນໍ້າເຊເຊັດ, ນໍ້າຫ້ວຍກະເພີ, ຫ້ວຍນໍ້າໃສ, ນໍ້າເຊຕະນວນ, ນໍ້າເຊກະເທດ, ນໍ້າຫ້ວຍໄລ່, ເຊລະນອງ, ເຊລະມັງ, ຫ້ວຍສະຫຼາຍ, ເຊໂປນ, ຫ້ວຍອາວຽນ, ຫ້ວຍອີເມີຍ ແລະ ສາຍນໍ້າອື່ນໆ, ສະນັ້ນ ຈຶ່ງເຮັດໃຫ້ ແຂວງ ສາລະວັນ ມີທ່າແຮງທາງດ້ານ ການພັດທະນາ ແຫຼ່ງນໍ້າ ທີ່ເອື້ອອຳນວຍ ໃຫ້ການພັດທະນາ ເສດຖະກິດ-ສັງຄົມ ເຊັ່ນ: ການກໍ່ສ້າງລະບົບຊົນລະປະທານ ແລະ ເຂື່ອນໄຟຟ້າພະລັງງານນໍ້າ. ຕະຫຼອດໄລຍະ 20 ປີ ຜ່ານມາ (2000-2019) ສະພາບແຫຼ່ງນໍ້າໃນແຂວງ ມີການປ່ຽນແປງ ຍ້ອນສະພາບການປ່ຽນແປງ ດິນຟ້າອາກາດ.

ແຂວງ ສາລະວັນ ມີເນື້ອທີ່ທັງໝົດ 1,069,100 ເຮັກຕາ ປະກອບມີ 8 ເມືອງຄື: ເມືອງ ສາລະວັນ, ເມືອງເລົ່າງາມ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງລະຄອນເພັງ, ເມືອງຕຸ້ມລານ, ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ, ມີຈຳນວນບ້ານທັງໝົດ 578 ບ້ານ, , ມີ 95,616 ຄອບຄົວ ແລະ ມີ 80,047 ຫຼັງຄາເຮືອນ, ມີບ້ານພັດທະນາ 275 ບ້ານ, ມີຈຳນວນ 34,441 ຄອບຄົວ, ມີບ້ານທຸກຍາກມີ 140 ບ້ານ, ມີ 8,691 ຄອບຄົວທຸກຍາກ (ຂໍ້ມູນປີ 2021 ສູນສະຖິຕິປະຈຳ 8 ເມືອງ ແລະ ຫ້ອງການພັດທະນາຊົນນະບົດ) ປະຊາຊົນສ່ວນໃຫຍ່ມີອາຊີບເຮັດການຜະລິດກະສິກຳແບບທຳມະຊາດ ແລະ ເຄິ່ງທຳມະຊາດ. ເພື່ອຄຸ້ມຄອງການນຳໃຊ້ນໍ້າໃຕ້ດິນໃນແຂວງ ສາລະວັນ ການປະເມີນການເພີ່ມຂຶ້ນ ຂອງ ປະຊາກອນກໍເປັນປັດໄຈ ໜຶ່ງທີ່ສຳຄັນທີ່ເປັນຂໍ້ມູນ ໃນການປະເມີນຄວາມຕ້ອງການຂອງການນຳໃຊ້ນໍ້າໃນອານາຄົດ.

ທໍລະນີສາດ ຂອງແຂວງ ສາລະວັນ ໂດຍອີງໃສ່ສະພາບພູມສັນຖານ, ຊັ້ນອຸທົກກະທໍລະນີ, ພູມອາກາດ ແລະ ອື່ນໆ ພົບວ່າ ຊັ້ນໃຫ້ນໍ້າ ໃນເຂດນີ້ແມ່ນປະກອບດ້ວຍ (1) ຊັ້ນໂພ້ງດິນ-ໂພ້ງຫີນ; (2) ຊັ້ນຫີນອັດແໜ້ນປົນແຮ່ທາດ; (3) ຊັ້ນຫີນດຶກດຳບັນ; (4) ຊັ້ນຫີນໃນຍຸຫີນ ແລະ (5) ຊັ້ນຫີນພູໄຟ-ຫີນໜາມໜໍ່; (6) ຊັ້ນດິນພູໄຟ; (7) ຊັ້ນດິນຕົມ.

ຊັ້ນໂພ້ງດິນ-ໂພ້ງຫີນ, ຊັ້ນຫີນອັດແໜ້ນປົນແຮ່ທາດ, ຊັ້ນຫີນດຶກດຳບັນ, ຊັ້ນຫີນໃນຍຸຫີນ , ຊັ້ນຫີນພູໄຟ-ຫີນໜາມໜໍ່, ຊັ້ນດິນພູໄຟ ແລະ ຊັ້ນດິນຕົມ. ຄາດຄະເນເຂດພື້ນທີ່ທີ່ຈະມີນໍ້າໃຕ້ດິນຫຼາຍສຸດແມ່ນຢູ່ ໃນເຂດ ຊັ້ນ

ຫີນພູໄຟ ປະລິມານການໄຫຼ ຂອງນໍ້າແມ່ນ 0,3-3 ລິດຕໍ່ວິນາທີ ແລະ ປະລິມານການໄຫຼຂອງນໍ້າຕໍ່າສຸດແມ່ນຢູ່ໃນເຂດຊັ້ນດິນອັດແໜ້ນປົນແຮ່ທາດ ແລະ ຊັ້ນໂພ້ງຫີນ ທີ່ມີປະລິມານການໄຫຼຂອງນໍ້າ ຢູ່ທີ່ 0-0,5 ລິດຕໍ່ວິນາທີ.

**ການປະເມີນນໍ້າໃຕ້ດິນເຫັນວ່າ** ການຕື່ມນໍ້າໃຕ້ດິນ ໃນແຂວງສາລະວັນ ແມ່ນມາຈາກນໍ້າຝົນ. ເນື່ອງຈາກນໍ້າຝົນເປັນປັດໄຈໜຶ່ງທີ່ເຄື່ອນຍ້າຍນໍ້າໄຫຼລົງໄປສູ່ໃຕ້ດິນ. ດັ່ງນັ້ນ, ເມື່ອນໍ້າຊຶມລົງໄປໃຕ້ດິນ ຈະເຮັດໃຫ້ອັດຕາການຕື່ມນໍ້າໃຕ້ດິນເພີ່ມຂຶ້ນ. **ການຕື່ມນໍ້າໃຕ້ດິນ:** ສະເລ່ຍ ແມ່ນ 534.67 ມມ/ປີ. ຄ່າສະເລ່ຍດັ່ງກ່າວ ແມ່ນຈາກບົດສຶກສາ ກ່ຽວກັບ "ການປະເມີນການຕື່ມນໍ້າໃຕ້ດິນລະດັບພາກພື້ນໃນອ່າງແມ່ນໍ້າຂອງຕອນລຸ່ມ" ປີ 2017 ເຊິ່ງອາດຈະມີຄ່າຜິດດ່ຽງສູງ. **ສະນັ້ນ, ຈຶ່ງຄວນມີການສຶກສາ ແລະ ສໍາຫຼວດ ລະອຽດຄືນໃນເຂດນີ້ ເພື່ອເປັນຂໍ້ມູນພື້ນຖານໃນການອອກອະນຸຍາດການນໍາໃຊ້ນໍ້າໃຕ້ດິນໃນອະນາຄົດ.**

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງນໍ້າໃຕ້ດິນມີຄວາມສອດຄອງກັບ ສະພາບຂອງຊັບພະຍາກອນນໍ້າ ໃນແຂວງ. ສະນັ້ນ, ຂໍ້ມູນທາງດ້ານ ຄວາມດຸ່ນດ່ຽງ ແລະ ຄວາມຕ້ອງການການນໍາໃຊ້ ນໍ້າໃຕ້ດິນ ຈຶ່ງມີຄວາມສໍາຄັນ ຫຼາຍຕໍ່ກັບການຄຸ້ມຄອງນໍ້າໃຕ້ດິນ. ຄວາມຕ້ອງການນໍ້າ ສາມາດຄາດຄະເນ ຫຼື ປະເມີນ ສໍາລັບການນໍາໃຊ້ ພາຍໃນແຂວງ, ລວມທັງຕາມຄົວເຮືອນ. ໃນນີ້ແມ່ນໄດ້**ປະເມີນຄວາມຕ້ອງການນໍ້າໃຕ້ດິນ ເປັນສອງ ໄລຍະຄື: ແຕ່ປີ 2020-2025 ແລະ ປີ 2026-2030, ຜົນຂອງການປະເມີນ ຄວາມຕ້ອງການການນໍາໃຊ້ນໍ້າ ສໍາລັບ ປີ 2020-2025 ແມ່ນ 12.36** ລ້ານແມັດກ້ອນ **ແລະ ແຕ່ປີ 2026-2030 ແມ່ນ 13.49** ລ້ານແມັດກ້ອນ ຜົນຂອງ ຄວາມດຸ່ນດ່ຽງຂອງນໍ້າໃຕ້ດິນ ແຕ່ປີ **2020-2025 ແມ່ນ 5,423.64** ລ້ານແມັດກ້ອນ ແລະ **ປີ 2026-2030 ແມ່ນ 5,156.10** ລ້ານແມັດກ້ອນ**.** ຂໍ້ມູນດັ່ງກ່າວສະແດງໃຫ້ເຫັນວ່າ ປະລິມານນໍ້າໃຕ້ດິນໃນແຂວງ ແມ່ນພຽງພໍຕໍ່ຄວາມຕ້ອງການນໍາໃຊ້ນໍ້າໃຕ້ດິນໃນແຕ່ລະປີ.

ຈາກຈຸດພິເສດ ແລະ ທ່າແຮງດ້ານຕ່າງໆທີ່ກ່າວມາຂ້າງເທິງນັ້ນ ເຖິງວ່າປະລິມານນໍ້າໃຕ້ດິນຈະມີພຽງພໍເພື່ອຕອບສະໜອງຄວາມຕ້ອງການນໍາໃຊ້ນໍ້າໃຕ້ດິນກໍ່ຕາມ, ແຕ່ມັນກໍ່ຍັງມີຫຼາຍບັນຫາຕໍ່ກັບສະພາບນໍ້າໃຕ້ດິນ ທີ່ຈະຕ້ອງໄດ້ເອົາໃຈໃສ່ໃນການປັບປຸງ ແລະ ແກ້ໄຂ ໃຫ້ດີຂຶ້ນເປັນຕົ້ນ: ບັນຫາການຂາດແຄນດ້ານຂໍ້ມູນ, ບັນຫາຄຸນນະພາບນໍ້າເສື່ອມໂຊມ ແລະ ການປ່ຽນແປງການນໍາໃຊ້ທີ່ດິນ ລວມເຖິງການເພີ່ມຂຶ້ນຂອງ ຄວາມຕ້ອງການນໍາໃຊ້ນໍ້າໃຕ້ດິນໃນແຕ່ລະປີ. ດັ່ງນັ້ນ, ຈຶ່ງຈໍາເປັນຕ້ອງມີແຜນການລະອຽດໃນການຄຸ້ມຄອງນໍ້າໃຕ້ດິນ, ຊຶ່ງແຜນຄຸ້ມຄອງນໍ້າໃຕ້ດິນແຂວງສາລະວັນ ແມ່ນໄດ້ສ້າງຂຶ້ນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງນໍ້າໃຕ້ດິນ ແຜນດັ່ງກ່າວ ແມ່ນໄດ້ກໍານົດ 3 ແຜນງານ, 5 ຄາດໝາຍ ແລະ 19 ກິດຈະກໍາດັ່ງນີ້: **ແຜນງານທີ 1:** ການສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງນໍ້າໃຕ້ດິນ, **ແຜນງານທີ 2:** ການເກັບກໍາຂໍ້ມູນ ແລະ ສ້າງຖານຂໍ້ມູນ-ຂ່າວສານນໍ້າໃຕ້ດິນ, **ແຜນງານທີ 3**: ການຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ນໍ້າໃຕ້ດິນ.

# ສາລະບານ

ສັງລວມຫຍໍ້..........i
ສາລະບານ..........iii
ສາລະບານຕາຕະລາງ..........v
ສາລະບານຮູບ..........vi

I. ພາກສະເໜີ..........1
1.1. ຈຸດປະສົງ..........1
1.2. ຂອບເຂດການນຳໃຊ້ແຜນຄຸ້ມຄອງນ້ຳໃຕ້ດິນ..........1
1.3. ທີ່ຕັ້ງ ແລະ ພູມສັນຖານ..........2
1.4. ອຸຕຸນິຍົມ ແລະ ອຸທົກກະສາດ..........4
1.5. ຄຸນະພາບນ້ຳ..........5
1.6. ສະພາບເສດຖະກິດ-ສັງຄົມ..........8

II. ສະພາບນ້ຳໃຕ້ດິນ..........15
2.1. ນ້ຳໃຕ້ດິນ..........15
2.1.1. ທໍລະນີສາດ..........15
2.1.2. ອຸທົກທໍລະນີສາດ ແລະ ປະລິມານນ້ຳໃຕ້ດິນ..........17
2.1.3. ການເຂົ້າເຖິງນ້ຳໃຕ້ດິນ..........22
2.1.4. ລະດັບນ້ຳ ແລະ ທິດທາງການໄຫຼ ຂອງນ້ຳໃຕ້ດິນ..........23

III. ການນຳໃຊ້ນ້ຳໃຕ້ດິນ ໃນປະຈຸບັນ..........24
3.1. ອຸປະໂພກ ແລະ ບໍລິໂພກ...........24
3.2. ກະສິກຳ...........25
3.3. ອຸດສາຫະກຳ..........26

IV. ການປະເມີນນ້ຳໃຕ້ດິນ...........27
4.1. ການປະເມີນນ້ຳໃຕ້ດິນ..........27
4.2. ການປະເມີນການນຳໃຊ້ນ້ຳໃຕ້ດິນໃນອານາຄົດ..........28
4.2.1. ອຸປະໂພກ ແລະ ບໍລິໂພກ...........29
4.2.2. ກະສິກຳ...........30
4.2.3. ອຸດສາຫະກຳ..........31
4.3. ຄວາມດຸນດ່ຽງຂອງນ້ຳໃຕ້ດິນ..........32
4.4. ກາລະໂອກາດ ແລະ ສິ່ງທ້າທ້າຍ..........33
4.4.1. ກາລະໂອກາດ..........33
4.4.2. ສິ່ງທ້າທ້າຍ..........34

V. ແຜນງານຂອງການຄຸ້ມຄອງນໍ້າໃຕ້ດິນ ........ 35
ແຜນງານ 1 : ການສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມ ການມີສ່ວນຮ່ວມ ໃນການຄຸ້ມຄອງນ້ຳໃຕ້ດິນ ........ 35
ແຜນງານ 2: ການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ-ຂ່າວສານ ນ້ຳໃຕ້ດິນ ........ 35
ແຜນງານ 3: ການຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ນ້ຳໃຕ້ດິນ ........ 36

VI. ມາດຕະການໃນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ........ 37
6.1. ອົງການຄຸ້ມຄອງ ແລະ ກວດກາ ........ 37
6.2. ມາດຕະການໃນການຈັດຕັ້ງປະຕິບັດ ........ 37
6.2.1 ອົງການຈັດຕັ້ງຂັ້ນສູນກາງ ........ 37
6.2.2 ອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ກຸ່ມບ້ານ ແລະ ບ້ານ) ........ 38
6.2.3 ຊຸມຊົນ ........ 38
6.3 ການຕິດຕາມກວດກາ ........ 38
6.4 ບັນດາຕົວຊີ້ວັດການປະເມີນຜົນການຈັດຕັ້ງປະຕິບັດ ........ 38

ເອກະສານອ້າງອີງ ........ 41
ເອກະສານຊ້ອນທ້າຍ ........ 43

# ສາລະບານຕາຕະລາງ


ຕາຕະລາງ 1: ຕາຕະລາງ ສົມທຽບຄ່າຊັກນ້ຳໄຟຟ້າ ແລະ ປະລິມານຄວາມເຄັມໃນນ້ຳ ເພື່ອການນຳໃຊ້...............6

ຕາຕະລາງ 2: ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງ ສາລະວັນ...........................................10

ຕາຕະລາງ 3: ປະຊາກອນແຂວງ ສາລະວັນ ......................................................................11

ຕາຕະລາງ 4: ເນື້ອທີ່ດິນປ່າໄມ້ ຂອງແຂວງສາລະວັນ ..........................................................13

ຕາຕະລາງ 5: ສັງລວມການນຳໃຊ້ທີ່ດິນ 8 ປະເພດໃນປັດຈຸບັນ ຂອງແຂວງສາລະວັນ ..............................13

ຕາຕະລາງ 6: ອັດຕາສ່ວນຮ້ອຍຂອງແຕ່ລະປະເພດຊັ້ນຫີນອູ້ມນ້ຳ ຢູ່ໃນແຕ່ລະເມືອງ...............................21

ຕາຕະລາງ 7: ສັງລວມການນຳໃຊ້ນ້ຳໃຕ້ດິນ ເພື່ອອຸປະໂພກ ແລະ ບໍລິໂພກ..........................................24

ຕາຕະລາງ 8: ການນຳໃຊ້ນ້ຳໃຕ້ດິນ ໃນຂະແໜງ ກະສິກຳ ແລະ ລ້ຽງສັດ.............................................25

ຕາຕະລາງ 9: ການນຳໃຊ້ນ້ຳໃຕ້ດິນ ໃນຂະແໜງ ອຸດສາຫະກຳ ........................................................26

ຕາຕະລາງ 10: ປະລິມານນ້ຳໃຕ້ດິນ ໃນຊັ້ນນ້ຳໃຕ້ດິນ .............................................................27

ຕາຕະລາງ 11: ການປະເມີນ ຄວາມຕ້ອງນຳໃຊ້ນ້ຳໃຕ້ດິນໃນຄົວເຮືອນ (2021-2030) .............................29

ຕາຕະລາງ 12: ການປະເມີນຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນຂະແໜງ ສາທາລະນະສຸກ ແລະ ການບໍລິການ..30

ຕາຕະລາງ 13: ການປະເມີນ ຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນຂະແໜງ ກະສິກຳ (2021-2025).............31

ຕາຕະລາງ 14: ການປະເມີນຄວາມຕ້ອງການນ້ຳໃຕ້ດິນໃນຂະແໜງ ອຸດສາຫະກຳ ....................................32

ຕາຕະລາງ 15 : ຕົວຊີ້ວັດການປະເມີນຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງນ້ຳໃຕ້ດິນ .............................39

ຕາຕະລາງ 16: ແຜນງົບປະມານທີ່ຈະໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງນ້ຳໃຕ້ດິນ .......................40

ຕາຕະລາງ 17: ແຜນດຳເນີນງານພ້ອມງົບປະມານ ຂອງແຜນຄຸ້ມຄອງນ້ຳໃຕ້ດິນ.......................................43

ຕາຕະລາງ 18: ຂໍ້ມູນຄຸນນະພາບນ້ຳໃຕ້ດິນແຂວງສາລະວັນ .............................................................48

ຕາຕະລາງ 19: ຂໍ້ມູນສະຖິຕິໂຮງງານທີ່ນຳໃຊ້ນ້ຳໃຕ້ດິນເຂົ້າໃນວຽກງານອຸດສາຫະກຳ...............................50

ຕາຕະລາງ20: ສະຖິຕິການນຳໃຊ້ນ້ຳໃຕ້ດິນເຂົ້າໃນວຽກງານຊົນລະປະທານ...........................................54

# ສາລະບານຮູບ

ຮູບທີ 1: ແຜນທີ່ການປົກຄອງ ແຂວງ ສາລະວັນ ປີ 2020 ........................................................ 2
ຮູບທີ 2: ແຜນທີ່ສະແດງ ລະດັບ ສູງ-ຕໍ່າ ຂອງພູມສັນຖານ ຂອງແຂວງ ສາລະວັນ ........................................ 4
ຮູບທີ 3: ແຜນທີ່ລະບົບສາຍນໍ້າຂອງແຂວງສາລະວັນ ........................................................ 5
ຮູບທີ 4: ແຜນທີ່ສະແດງ ຈຸດເກັບຕົວຢ່າງຄຸນນະພາບນໍ້າໃຕ້ດິນປີ 2020 ........................................ 8
ຮູບທີ 5: ແຜນທີ່ ສາມປະເພດປ່າໄມ້ ແຂວງສາລະວັນ. ........................................................ 12
ຮູບທີ 6: ແຜນທີ່ ການນໍາໃຊ້ທີ່ດິນ ແຂວງສາລະວັນ ........................................................ 14
ຮູບທີ 7: ແຜນທີ່ ດິນກະສິກໍາ ແລະ ປ່າໄມ້ ຂອງແຂວງສາລະວັນ ........................................................ 14
ຮູບທີ 8: ແຜນທີ່ທໍລະນີສາດ ຂອງແຂວງສາລະວັນ ........................................................ 16
ຮູບທີ 9: ແຜນທີ່ປະສິດທິພາບໃນການຈ່າຍນໍ້າຕາມແຕ່ລະປະເພດຊັ້ນຫີນອູ້ມນໍ້າ ແຂວງ ສາລະວັນ ................ 20
ຮູບທີ 10: ແຜນທີ່ສະແດງ ຈຸດທີ່ຕັ້ງບ້ານຢູ່ ແຕ່ລະປະເພດຊັ້ນຫີນອູ້ມນໍ້າ ໃນ ແຂວງ ສາລະວັນ .................... 20
ຮູບທີ 11: ສີມທຽບອັດຕາສ່ວນຮ້ອຍຂອງຊັ້ນທໍລະນີຕໍ່ເນື້ອທີ່ ແຂວງ ສາລະວັນ ........................................ 21
ຮູບທີ 12: ແຜນທີ່ ປະເພດແຫຼ່ງນໍາໃຊ້ນໍ້າຢູ່ແຕ່ລະບ້ານ ແຂວງສາລະວັນ ........................................ 23
ຮູບທີ 13: ແຜນທີ່ ປະລິມານການຕື່ມນໍ້າໃຕ້ດິນ (Recharge) ຢູ່ ແຂວງ ສາລະວັນ ................................ 28
ຮູບທີ 14: ເສັ້ນສະແດງສະຫຼຸບຄວາມຕ້ອງການ ແລະ ຄວາມດຸ່ນຂອງນໍ້າໃຕ້ດິນ ........................................ 33

# I. ພາກສະເໜີ

ແຂວງ ສາລະວັນແມ່ນແຂວງໜຶ່ງທີ່ມີທ່າແຮງທາງດ້ານ ຊັບພະຍາກອນທຳມະຊາດ ແລະ ມີແມ່ນ້ຳໄຫຼຜ່ານ ເປັນຕົ້ນ: ນ້ຳເຊຂອງ, ນ້ຳເຊໂດນ, ນ້ຳເຊບັ້ງນວນ, ນ້ຳເຊເຊັດ, ນ້ຳຫ້ວຍກະເພີ, ຫ້ວຍນ້ຳໃສ, ນ້ຳເຊຕະນວນ, ນ້ຳເຊກະເທດ, ນ້ຳຫ້ວຍໄລ່, ເຊລະນອງ, ເຊລະມັງ, ຫ້ວຍສະຫຼາຍ, ເຊໂປນ, ຫ້ວຍອາວຽນ, ຫ້ວຍອີເມີຍ ແລະ ສາຍນ້ຳອື່ນໆ. ສະນັ້ນ, ຈຶ່ງເຮັດໃຫ້ ແຂວງ ສາລະວັນ ມີທ່າແຮງທາງດ້ານການພັດທະນາແຫຼ່ງນ້ຳ ທີ່ເອື້ອອຳນວຍ ໃຫ້ການພັດທະນາເສດຖະກິດ-ສັງຄົມ ເຊັ່ນ: ການກໍ່ສ້າງລະບົບຊົນລະປະທານ ແລະ ເຂື່ອນໄຟຟ້າພະລັງງານນ້ຳ. ຕະຫຼອດໄລຍະ 20 ປີຜ່ານມາ (2000-2019) ສະພາບແຫຼ່ງນ້ຳໃນແຂວງ ມີການປ່ຽນແປງຍ້ອນສະພາບການປ່ຽນແປງດິນຟ້າອາກາດ.

ແຂວງສາລະວັນ ແມ່ນແຂວງໜຶ່ງທີ່ມີເນື້ອທີ່ສ່ວນຫຼາຍນອນຢູ່ໃນອ່າງຮັບນ້ຳເຊໂດນ ທີ່ມັກເກີດເຫດການນ້ຳຖ້ວມຢູ່ເປັນປະຈຳ ແລະ ກໍ່ໃຫ້ເກີດຜົນເສຍຫາຍເປັນຈຳນວນຫຼວງຫຼາຍ ເຊັ່ນ: ເມືອງສາລະວັນ, ເມືອງວາປີ ແລະ ເມືອງຄົງເຊໂດນ ຊຶ່ງໄດ້ກໍ່ໃຫ້ເກີດຜົນເສຍຫາຍທາງດ້ານເສດຖະກິດຫຼາຍພໍສົມຄວນທາງດ້ານສະພາບຂອງນ້ຳໃຕ້ດິນໃນຫຼາຍປີຜ່ານມາ ນ້ຳໃຕ້ດິນໄດ້ຖືກນຳໃຊ້ໃນປະລິມານໜ້ອຍແຕ່ໃນສະພາບປະຈຸບັນ ຍ້ອນການປ່ຽນແປງດິນຟ້າອາກາດ ໄດ້ສົ່ງຜົນກະທົບໃຫ້ສະພາບຂອງແຫຼ່ງນ້ຳໜ້າດິນ ມີການປ່ຽນແປງ ຈຶ່ງສົ່ງຜົນໃຫ້ມີການນຳໃຊ້ນ້ຳໃຕ້ດິນ ນັບມື້ນັບຫຼາຍຂຶ້ນເພື່ອການດຳລົງຊີວິດປະຈຳວັນໂດຍສະເພາະ ການນຳໃຊ້ໃນຄົວເຮືອນ ແລະ ການປູກຜັກສວນຄົວຊຶ່ງພົບເຫັນໃນເຂດທົ່ງພຽງ ເປັນສ່ວນໃຫຍ່. ແຕ່ການນຳໃຊ້ນ້ຳໃຕ້ດິນ ເພື່ອການຜະລິດກະສິກຳ ແລະ ອຸດສາຫະກຳ ແມ່ນຍັງບໍ່ທັນຫຼາຍ. ແຕ່ເຖິງຢ່າງໃດກໍ່ຕາມ ເພື່ອຮັບປະກັນການນ້ຳໃຊ້ນ້ຳໃຕ້ດິນ ໃນອານາຄົດທີ່ອາດຈະເກີດຂຶ້ນມັນຈຳເປັນຕ້ອງມີແຜນຄຸ້ມຄອງນ້ຳໃຕ້ດດິນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງ ການນຳໃຊ້ນ້ຳໃຕ້ດິນ ໃຫ້ເກີດປະ ໂຫຍດສູງສຸດ ແລະ ມີຄວາມຍືນຍົງ. ຊຶ່ງແຜນດັ່ງກ່າວ ຕ້ອງມີການກຳນົດບັນຫາ ແລະ ຂໍ້ຄົງຄ້າງຕໍ່ກັບນ້ຳໃຕ້ດິນ, ວຽກງານການຄຸ້ມຄອງນ້ຳໃຕ້ດິນຕ້ອງມີການກຳນົດກິດຈະກຳລະອຽດ ເພື່ອຊ່ວຍໃນການແກ້ໄຂບັນຫາ ແລະ ຂໍ້ຄົງ ຄ້າງດັ່ງກ່າວ.

## 1.1. ຈຸດປະສົງ

ແຜນຄຸ້ມຄອງນ້ຳໃຕ້ດິນສະບັບນີ້ ຈຸດປະສົງລວມແມ່ນເພື່ອປັບປຸງ ວຽກງານ ການຄຸ້ມຄອງນ້ຳໃຕ້ດິນ ໃຫ້ເປັນລະບົບ ແລະ ມີປະສິດທິພາບສູງຂຶ້ນ ພ້ອມທັງ ຊຸກຍູ້ສົ່ງເສີມ ການນຳໃຊ້ນ້ຳໃຕ້ດິນ ຢ່າງມີ ປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ ບົນພື້ນຖານຫຼັກການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ທີ່ເປັນປະໂຫຍດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ນຳໄປສູ່ການຫຼຸດຜ່ອນຄວາມທຸກຍາກ ແລະ ເສີມຂະຫຍາຍການຊົມໃຊ້ນ້ຳໃຕ້ດິນໃຫ້ມີຄວາມຍືນຍົງ ໃນໄລຍະຍາວ. ແຜນການຄຸ້ມຄອງນ້ຳໃຕ້ດິນ ສະບັບນີ້ ແມ່ນມີ 3 ຈຸດປະສົງຄື:

- ກຳນົດບັນຫາລວມ ກ່ຽວກັບ ນ້ຳໃຕ້ດິນ ຢູ່ແຂວງສາລະວັນ
- ສ້າງແຜນການ 5 ປີ ກ່ຽວກັບການຄຸ້ມຄອງນ້ຳໃຕ້ດິນ
- ກຳນົດແຜນການຈັດຕັ້ງປະຕິບັດ, ການຫຼຸດຜ່ອນ ແລະ ການຕິດຕາມກວດກາ ເພື່ອການຄຸ້ມຄອງ ນ້ຳໃຕ້ດິນ.

## 1.2. ຂອບເຂດການນຳໃຊ້ແຜນຄຸ້ມຄອງນ້ຳໃຕ້ດິນ

ແຜນຄຸ້ມຄອງນ້ຳໃຕ້ດິນສະບັບນີ້ ແມ່ນນຳໃຊ້ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນທີ່ຢູ່ໃນຂອບເຂດແຂວງ ສາລະວັນ. ໄລຍະຂອງການນຳໃຊ້ແມ່ນ ແຕ່ປີ 2021-2025 ໂດຍອີງຕາມ ກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ປີ 2017.

## 1.3. ທີ່ຕັ້ງ ແລະ ພູມສັນຖານ

ແຂວງ ສາລະວັນ ຕັ້ງຢູ່ທິດເໜືອ ຂອງ 4 ແຂວງພາກໃຕ້ຂອງ ສປປ ລາວ, ລະຫວ່າງ ເສັ້ນຂະໜານທີ 15°17' ແລະ ເສັ້ນແວງທີ 103°20', ແຂວງ ສາລະວັນມີຊາຍແດນຕິດກັບ 3 ແຂວງ ແລະ 2 ປະເທດຄື: ທິດເໜືອ ຕິດກັບ ແຂວງສະຫວັນນະເຂດ ມີຄວາມຍາວ 275 ກິໂລແມັດ; ທິດໃຕ້ ຕິດກັບ ແຂວງຈຳປາສັກ ມີຄວາມຍາວ175 ກິໂລແມັດ; ທິດຕາເວັນອອກ ຕິດກັບ ແຂວງກວາງຈີ້ ແລະ ເທືອທຽນເຫວ້ (ສສ ຫວຽດນາມ) ມີຄວາມຍາວ 116 ກິໂລແມັດ ແລະ ແຂວງ ເຊກອງ ມີຄວາມຍາວ 200 ກິໂລແມັດ; ທິດຕາເວັນຕົກ ຕິດກັບ ແຂວງອຸບົນຣາຊະທານີ ( ຣາດຊະນາຈັກໄທ) ມີຄວາມຍາວ 90 ກິໂລແມັດ.




(ແຫຼ່ງຂໍ້ມູນ: ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ)

ຮູບທີ 1: ແຜນທີ່ການປົກຄອງ ແຂວງ ສາລະວັນ ປີ 2020

ແຂວງ ສາລະວັນ ແບ່ງພູມສັນຖານ ອອກເປັນ 3 ເຂດຄື: ທົ່ງພຽງ, ພູພຽງ ແລະ ພູດອຍ ຊຶ່ງມີລາຍລະອຽດດັ່ງນີ້:

**ເຂດທົ່ງພຽງ:** ມີເນື້ອທີ່ 497,925 ເຮັກຕາ, ກວມ 44% ຂອງເນື້ອທີ່ທັງໝົດໃນທົ່ວແຂວງ, ມີຄວາມສູງຈາກລະດັບໜ້ານໍ້າທະເລປານກາງ 140-300 ແມັດ, ອຸນຫະພູມສູງສຸດ 40 ອົງສາເຊ, ອຸນຫະພູມຕໍ່າສຸດ 11 ອົງສາເຊ ອຸນຫະພູມສະເລ່ຍ 25.5 ອົງສາເຊ ຕໍ່ປີ, ກວມເອົາ 5 ເມືອງຄື: ເມືອງສາລະວັນ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງລະຄອນເພັງ ແລະ ເມືອງຕຸ້ມລານ ເປັນພື້ນທີ່ເໝາະສົມແກ່ການປູກເຂົ້າ, ພືດອຸດສະຫະກຳ, ພືດຜັກອາຍຸສັ້ນ, ລ້ຽງສັດນ້ອຍ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ, ໂຄງການລົງທຶນດ້ານການບໍລິການທາງຜ່ານ ແລະການທ່ອງທ່ຽວ.

**ເຂດພູພຽງ:** ມີເນື້ອທີ່ 207,700 ເຮັກຕາ, ກວມເອົາ 19% ຂອງເນື້ອທີ່ທັງໝົດທົ່ວແຂວງ, ມີຄວາມສູງຈາກລະດັບໜ້ານໍ້າທະເລປານກາງ 300-1,200 ແມັດ, ອຸນຫະພູມສູງສຸດ 35 ອົງສາເຊ, ອຸນຫະພູມຕໍ່າສຸດ 8 ອົງສາເຊ, ອຸນຫະພູມສະເລ່ຍ 21.5 ອົງສາເຊ ຕໍ່ປີ ກວມເອົາ 4 ເມືອງຄື: ເມືອງເລົ່າງາມ, ເມືອງສາລະວັນ, ເມືອງວາປີ ແລະ ສ່ວນໜຶ່ງຂອງເມືອງຄົງເຊໂດນ, ເປັນພື້ນທີ່ເໝາະສົມແກ່ການປູກພືດອຸດສະຫະກຳ, ກາເຟ, ພືດເປັນຢາ, ໝາກ ແ ໜ່ງ, ພິກໄທ, ໄມ້ໃຫ້ໝາກ, ພືດຕະກຸນຖົ່ວ, ພືດທາດແປ້ງ, ພືດຜັກເຂດໜາວ, ລ້ຽງສັດໃຫຍ່, ປຸງແຕ່ງຜະລິດຕະພັນກະສິກຳ – ອຸດສະຫະກຳ ແລະ ການທ່ອງທ່ຽວ.

**ເຂດພູດອຍ:** ມີເນື້ອທີ່ 363,475 ເຮັກຕາ, ກວມເອົາ 37% ຂອງເນື້ອທີ່ທັງໝົດໃນທົ່ວແຂວງ, ມີຄວາມສູງຈາກລະດັບໜ້ານໍ້າທະເລ 700-1,200 ແມັດ, ອຸນຫະພູມສູງສຸດ 34 ອົງສາເຊ, ອຸນຫະພູມຕໍ່າສຸດ 8 ອົງສາເຊ, ອຸນຫະພູມສະເລ່ຍ 21 ອົງສາເຊ ຕໍ່ປີ ກວມເອົາ 2 ເມືອງຄື: ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ, ເປັນພື້ນທີ່ເໝາະສົມແກ່ການປູກພືດ, ໄມ້ເສດຖະກິດແບບປະສົມປະສານ, ລ້ຽງສັດ, ປູກພືດທາດແປ້ງ ແລະ ອື່ນໆ.

ແຜນທີ່ ລະດັບຄວາມສູງ-ຕ່ຳ ໜ້າດິນ ແຂວງ ສາລະວັນ




(ແຫຼ່ງຂໍ້ມູນ: ກົມແຜນທີ່ແຫ່ງຊາດ )

ຮູບທີ 2: ແຜນທີ່ສະແດງ ລະດັບ ສູງ-ຕ່ຳ ຂອງພູມສັນຖານ ຂອງແຂວງ ສາລະວັນ

## 1.4. ອຸຕຸນິຍົມ ແລະ ອຸທົກກະສາດ

ແຂວງ ສາລະວັນ ແມ່ນນອນໃນເຂດອາກາດຮ້ອນຊຸ່ມ ແລະ ມີອຸນນະພູມສະເລ່ຍ ສູງສຸດ 35-36 ອົງສາເຊ ຕ່ຳສຸດ 19-20 ອົງສາເຊ ຄວາມຊຸ່ມສະເລ່ຍ 74-76 ເປີເຊັນ, ເຊິ່ງມີປະລິມານນ້ຳຝົນຕົກຕາມເກນປົກກະຕິຕໍ່ປີຄື: ເມືອງ ສາລະວັນ 2,000-2,200 ມມ/ປີ, ເມືອງ ຄົງເຊໂດນ 1,900-2,100 ມມ/ປີ ແລະ ເມືອງ ເລົ່າງາມແມ່ນ 1,600-1,800 ມມ/ປີ, ເຊິ່ງລະດູຝົນເລີ່ມແຕ່ເດືອນ ມິຖຸນາ ຫາ ເດືອນ ຕຸລາ ແລະ ລະດູແລ້ງ ເລີ່ມແຕ່ ພະຈິກ ຫາ ເດືອນ ພຶດສະພາ ຂອງທຸກໆປີ.

ແຂວງ ສາລະວັນ ນອນໃນອ່າງຮັບນ້ຳທີ່ສຳຄັນເຊັ່ນ: ອ່າງຮັບນ້ຳເຊໂດນ, ອ່າງຮັບນ້ຳເຊບັ້ງຫຽງ, ອ່າງຮັບນ້ຳເຊກອງ ແລະ ອ່າງຮັບນ້ຳເຊບັ້ງນວນ ທີ່ເປັນສາຂາຂອງແມ່ນ້ຳຂອງ, ໃນອ່າງຮັບນ້ຳຍັງມີແມ່ນ້ຳສາຍຫຼັກ ແລະ ສຳຄັນໃນການດຳລົງຊີວິດຂອງປະຊາຊົນພາຍໃນແຂວງ ແລະ ເປັນທ່າແຮງໃນການສະໜອງປະລິມານນ້ຳ ມີສາຍນ້ຳສຳຄັນທີ່ໄຫລຜ່ານມີຄື: ນ້ຳຂອງ, ນ້ຳເຊໂດນ, ນ້ຳເຊບັ້ງນວນ, ນ້ຳເຊເຊັດ, ນ້ຳຫ້ວຍກະເພີ, ຫ້ວຍນ້ຳໃສ, ນ້ຳເຊຕະນວນ, ນ້ຳເຊກະເທດ, ນ້ຳຫ້ວຍໄລ່, ເຊລະນອງ, ເຊລະມັງ, ຫ້ວຍສະຫຼາຍ, ເຊໂປນ, ຫ້ວຍອາວຽນ, ຫ້ວຍອິເມີຍ ແລະ ສາຍນ້ຳອື່ນໆ, ນອກນັ້ນຍັງມີ ໜອງ-ບຶງໃຫຍ່ ຈຳນວນ 7 ແຫ່ງ ຄື: ໜອງບົວ, ກຸດຈະເກີງ, ໜອງເຈົ້າ-ໜອງດາວ, ບຶງແອະ, ບຶງໂລ່ມໂລກ, ບຶງທຶມ ແລະ ບຶງສະໂອ, ນອກຈາກນີ້ ຍັງມີບັນດາຫ້ວຍນ້ຳອື່ນໆ ເຊິ່ງມີຄວາມສຳຄັນໃຫ້ແກ່ການດຳລົງຊີວິດ ແລະ ການຜະລິດກະສິກຳຂອງປະຊາຊົນເປັນຕົ້ນຕໍ, ມີໂຮງງານຜະລິດນ້ຳປະປາ 8 ແຫ່ງ, ໃນນັ້ນ ມີບ້ານທີ່ຊົມໃຊ້ນ້ຳປະປາ 335 ບ້ານ, ກວມເອົາ 58 % ຂອງຈຳນວນບ້ານໃນທົ່ວແຂວງ, ປະລິມານການຜະລິດໄດ້ທັງໝົດ 9,441,496 ແມັດກ້ອນ/ປີ, ສາມາດຈຳໜ່າຍນ້ຳໃຫ້ແກ່ຜູ້ຊົມໃຊ້ ໄດ້ທັງໝົດ 7,608,526 ແມັດກ້ອນ/ປີມີຈຳນວນ

ຫຼັງຄາເຮືອນທີ່ຊົມໃຊ້ນ້ຳປະປາມີ 36,354 ຫຼັງຄາເຮືອນ ຫຼື ເທົ່າກັບ 52% ຂອງຈຳນວນຫຼັງຄາເຮືອນທັງໝົດໃນທົ່ວແຂວງ.

(ແຫຼ່ງຂໍ້ມູນ: ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທາມະຊາດແບບຮອບດ້ານ ແຂວງ ສາລະວັນ ປີ 2020)




(ແຫຼ່ງຂໍ້ມູນ: ກົມຊັບພະຍາກອນນ້ຳ)

ຮູບທີ 3: ແຜນທີ່ລະບົບສາຍນ້ຳຂອງແຂວງສາລະວັນ

## 1.5. ຄຸນນະພາບນ້ຳ

ສຳລັບຄຸນນະພາບນ້ຳໃຕ້ດິນແຂວງ ສາລະວັນ ຍັງບໍ່ມີຂໍ້ມູນກ່ຽວກັບການກວດກາຄຸນນະພາບຂອງນ້ຳໃຕ້ດິນ ຢ່າງໃດກໍ່ຕາມ, ການປົນເປື້ອນໃນນ້ຳໃຕ້ດິນຄວນໄດ້ຮັບການປົກປ້ອງໂດຍການປະຕິບັດທີ່ເໝາະສົມໃນເຂດການເຕີມນ້ຳໃຕ້ດິນ ເພື່ອຮັກສາຄຸນນະພາບຂອງນ້ຳບາດານ, ນ້ຳສ້າງ, ນ້ຳອອກບໍ່.

ຄຸນນະພາບນ້ຳໃຕ້ດິນໃນແຂວງສາລະວັນ ແມ່ນຈະເນັ້ນໃສ່ຜົນຂອງການເກັບກຳຂໍ້ມູນຄຸນນະພາບນ້ຳໃຕ້ດິນປີ 2020 ລວມທັງໝົດ 34 ຈຸດທົ່ວແຂວງໃນ 8 ເມືອງຄື: ເມືອງ ສາລະວັນ, ຕະໂອ້ຍ, ນະຄອນເພັງ, ຄົງເຊໂດນ, ຕຸ້ມລານ, ວາປີ, ເລົ່າງາມ, ສະໝ້ອຍ. ສາມາດວັດແທກຄ່າອຸນຫະພູມ (t°c), ຄວາມເປັນກົດ-ດ່າງ (pH) ແລະ ຄ່າຊັກນຳໄຟຟ້າ (EC) ໂດຍມີລາຍລະອຽດດັ່ງນີ້:

ຈາກການເກັບກຳຂໍ້ມູນຄຸນນະພາບນ້ຳໃຕ້ດິນແຂວງ ສາລະວັນປີ 2020 ແມ່ນໃຫ້ເຫັນວ່າ ຄ່າຊັກນຳໄຟຟ້າເກີນ 800 (µS/Cm) ຄື 840 (µS/Cm) ຄື ແມ່ນຢູ່ບ້ານ ໂຮງມີໄຊ, ເມືອງ ຄົງເຊໂດນ, ບ້ານນາພະບາງ, ເມືອງນະຄອນເພັງ, ບ້ານ ນາເຫຼັກ, ເມືອງ ສາລະວັນ ແລະ ບ້ານ ສາມັກຄີໄຊ, ເມືອງ ຕຸ້ມລານ ຖ້າສົມທຽບກັບຕາຕະລາງທີ 7 ແມ່ນເຫັນວ່ານ້ຳໃຕ້ດິນຈຸດດັ່ງກ່າວແມ່ນມີຄວາມເຄັມເລັກໜ້ອຍ.

- **ອຸນຫະພູມ (°C)**ອຸນຫະພູມນໍ້າມີຜົນຕໍ່ຄຸນນະພາບນໍ້າໂດຍລວມ ແລະ ມີຜົນຕໍ່ຄວາມສາມາດການລະລາຍຂອງກາສ ຄື: ກາສອັອກຊີເຈນ ສ່ວນຫຼາຍແລ້ວສາມາດລະລາຍໄດ້ດີໃນນໍ້າເຢັນ ຫຼາຍກວ່ານໍ້າອຸ່ນ ເຊັ່ນ: ຖ້າຫາກວ່າອຸນຫະພູມຂອງນໍ້າຂ້ອນຂ້າງສູງ ຈະເຮັດໃຫ້ຄວາມສາມາດໃນການຮັກສາອັອກຊີເຈນໃນນໍ້າຫຼຸດລົງ;
- **ຄ່າຄວາມເປັນກົດ-ດ່າງ (pH)** ໝາຍເຖິງ ຄວາມເປັນກົດ-ດ່າງ ຂອງນໍ້າ (ຄ່າ pH ຕ້ອງຢູ່ໃນຊ່ວງ 5-9) ຖ້າຕໍ່າກວ່າ 5 ນໍ້າມີລັກສະນະເປັນກົດ ແລະ ສູງກ່ອນ 9 ນໍ້າມີລັກສະນະເປັນດ່າງ. ການວັດແທກຄ່າ pH (potential of Hydrogen ຄື ຄ່າທີ່ສະແດງເຖິງຄວາມເຂັ້ມຂຸ້ນຂອງໄຮໂດຣເຈນ) ສະແດງໃຫ້ເຫັນເຖິງຄວມເປັນກົດ-ດ່າງຂອງທາດລະລາຍນັ້ນໆ. ໂດຍອີງໃສ່ ມາດຕະຖານສິ່ງແວດລ້ອມແຫ່ງຊາດ ຂອງປະເພດແຫຼ່ງນໍ້າປະເພດ 3 (ແຫຼ່ງນໍ້າຄວນມີຄ່າ pHໃກ້ຄຽງກັບ 7 ຊຶ່ງສາມາດນໍາມາໃຊ້ປະໂຫຍດໄດ້ຫຼາຍ ເຊັ່ນ: ການອຸປະໂພກ ແລະ ບໍລິໂພກ, ການກະສິກໍາ, ອຸດສາຫະກໍາ ແລະ ອື່ນໆ);
- **ຄ່າຊັກນໍາໄຟຟ້າ (EC)** ໝາຍເຖິງຄວາມສາມາດຂອງນໍ້າໃນການຊັກນໍາໄຟຟ້າ ສ່ວນໃຫຍ່ຈະປ່ຽນແປງໂດຍກົງກັນຂ້າມກັບຄວາມເຄັມຂອງນໍ້າ ໃນແຫຼ່ງນໍ້າປົກກະຕິຈະມີຄ່າຊັກນໍາໄຟຟ້າປະມານ 150-300 (µS/cm) ຊຶ່ງຕາຕະລາງລຸ່ມນີ້ສະແດງໃຫ້ເຫັນຄ່າຊັກນໍາໄຟຟ້າ ແລະ ປະລິມານຄວາມເຄັມໃນນໍ້າເພື່ອການນໍາໃຊ້

ຕາຕະລາງ 1: ຕາຕະລາງ ສົມທຽບຄ່າຊັກນໍາໄຟຟ້າ ແລະ ປະລິມານຄວາມເຄັມໃນນໍ້າ ເພື່ອການນໍາໃຊ້

| ຄ່າ EC (µS/cm) | ປະເພດ | ການນໍາໃຊ້ |
|---|---|---|
| 0 - 800 | ນໍ້າຈືດ-Fresh water | ▪ ເໝາະສໍາລັບການເຮັດນໍ້າດື່ມ (ຫາກບໍ່ມີມົນລະພິດທາງອິນຊີ ແລະ ບໍ່ມີວັດຖຸດິນໜຽວແຂວນລອຍຫຼາຍເກີນໄປ).<br>▪ ໂດຍທົ່ວໄປແລ້ວເໝາະສໍາລັບການຊົນລະປະທານ, ເຖິງແມ່ນວ່າຄ່າສູງກວ່າ 300 µS/cm, ເຊິ່ງຕ້ອງລະມັດລະວັງ ໂດຍສະເພາະກັບເຄື່ອງສີດນໍ້າ sprinklers, ເຊິ່ງອາດຈະເຮັດໃຫ້ໃບໄມ້ໃນພືດບາງຊະນິດທີ່ແພ້ເກືອ.<br>▪ ເໝາະສໍາລັບການລ້ຽງສັດທຸກຊະນິດ. |
| 800-2,500 | ນໍ້າເຄັມເລັກໜ້ອຍ-Slightly saline | ▪ ຄົນສາມາດບໍລິໂພກໄດ້<br>▪ ເມື່ອນໍາໃຊ້ເຂົ້າໃນການຊົນລະປະທານ ຕ້ອງມີການຄຸ້ມຄອງພິເສດ ເຊັ່ນ ການນໍາໃຊ້ດິນທີ່ເໝາະສົມ, ການລະບາຍນໍ້າທີ່ດີ ແລະ ການພິຈາລະນາການນໍາໃຊ້ພືດທີ່ມີຄວາມທົນທານຕໍ່ຄວາມເຄັມ.<br>▪ ເໝາະສໍາລັບການລ້ຽງສັດທຸກຊະນິດ. |

| ຄ່າ EC (µS/cm) | ປະເພດ | ການນຳໃຊ້ |
|---|---|---|
| 2,500-10,000 | ນ້ຳເຄັມປານກາງ- Moderately saline | ▪ ບໍ່ແນະນຳໃຫ້ຄືນບໍລິໂພກ, ເຖິງແມ່ນວ່ານ້ຳທີ່ມີຄ່າຄວາມເຄັມສູງເຖິງ 3,000 µS/cm ສາມາດບໍລິໂພກໄດ້ກໍ່ຕາມ<br>▪ ປົກກະຕິແມ່ນບໍ່ເໝາະສົມກັບການຊົນລະປະທານ ເຖິງແມ່ນວ່າຄ່າສູງເຖິງ 6,000 µS/cm ສາມາດນຳໃຊ້ໃນການປູກພືດທີ່ທົນທານຕໍ່ຄວາມເຄັມດ້ວຍເຕັກນິກການຈັດການພິເສດ. ນ້ຳທີ່ມີຄ່າ EC ຫຼາຍກວ່າ 6,000 µS/cm ອາດສາມາດນຳໃຊ້ໄດ້ໃນກໍລະນີສຸກເສີນ ແຕ່ຕ້ອງນຳໃຊ້ດ້ວຍຄວາມລະມັດລະວັງ<br>▪ ເມື່ອນຳໃຊ້ສຳລັບເປັນນ້ຳດື່ມຂອງສັດປີກ ແລະ ໝູ, ຄວາມເຄັມຄວນຈະຖືກຈຳກັດຢູ່ທີ່ປະມານ 6,000 µS/cm ສັດລ້ຽງອື່ນໆສ່ວນໃຫຍ່ສາມາດໃຊ້ນ້ຳໄດ້ເຖິງ 10,000 µS/cm |
| > 10.000 | ນ້ຳເຄັມຫຼາຍ- Highly saline | ▪ ບໍ່ເໝາະສົມສຳລັບການບໍລິໂພກຂອງຄົນ ຫຼື ນຳໃຊ້ໃນວຽກງານຊົນລະປະທານ<br>▪ ບໍ່ເໝາະສົມສຳລັບສັດປີກ, ໝູ ຫຼື ສັດລ້ຽງລູກດ້ວຍນ້ຳນົມ. ແຕ່ງົວພັນຊີ້ນງົວສາມາດນຳໃຊ້ນ້ຳໄດ້ເຖິງ 17,000 µS/cm, ແລະ ແກະໃຫຍ່ເຕັມໄວທີ່ກິນອາຫານແຫ້ງສາມາດນຳໃຊ້ນ້ຳໄດ້ເຖິງ 23,000 µS/cm. ຢ່າງໃດກໍ່ຕາມ,ເປັນໄປໄດ້ວ່ານ້ຳທີ່ຢູ່ລະດັບຕ່ຳກວ່ານີ້ອາດຈະມີຄວາມເຂັ້ມຂຸ້ນຂອງທາດເຫຼັກໃນປະລິມານທີ່ບໍ່ສາມາດຍອມຮັບໄດ້. ດັ່ງນັ້ນຄວນມີການວິໄຈຜ່ານຫ້ອງວິໄຈກ່ອນທີ່ຈະນຳໃຊ້ນ້ຳນີ້ສຳລັບການລ້ຽງສັດ.<br>▪ ນ້ຳທີ່ມີຄ່າ EC ສູງເຖິງ 50,000 µS/cm (ນ້ຳທະເລ) ສາມາດນຳໃຊ້ໄດ້<br>(i) ເພື່ອຊະລ້າງໃນຫ້ອງນ້ຳ ແລະ<br>(ii) ສຳລັບການຜະສົມເບຕົງ. |

(ແຫຼ່ງຂໍ້ມູນ: ຄະນະກຳມະການປະສານງານອ່າງເກັບນ້ຳແມ່ຮີ MRCCC, 2013)




ຮູບທີ 4: ແຜນທີ່ສະແດງ ຈຸດເກັບຕົວຢ່າງຄຸນນະພາບນ້ຳໃຕ້ດິນປີ 2020

## 1.6. ສະພາບເສດຖະກິດ-ສັງຄົມ

ແຂວງ ສາລະວັນ ມີເນື້ອທີ່ທັງໝົດ 1,069,100 ເຮັກຕາ, ປະກອບມີ 8 ເມືອງຄື: ເມືອງ ສາລະວັນ, ເມືອງ ເລົ່າງາມ, ເມືອງວາປີ, ເມືອງຄົງເຊໂດນ, ເມືອງລະຄອນເພັງ, ເມືອງຕຸ້ມລານ, ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ, ມີຈຳນວນບ້ານທັງໝົດ 578 ບ້ານ, ມີ 95,616 ຄອບຄົວ ແລະ ມີ 80,047 ຫຼັງຄາເຮືອນ, ມີບ້ານພັດທະນາ 275 ບ້ານ, ມີຈຳນວນ 34,441 ຄອບຄົວ, ມີບ້ານທຸກຍາກມີ 140 ບ້ານ, ມີ 8,691 ຄອບຄົວທຸກຍາກ (ຂໍ້ມູນປີ 2021 ສູນສະຖິຕິປະຈຳ 8 ເມືອງ ແລະ ຫ້ອງການພັດທະນາຊົນນະບົດ) ມີ 10 ຊົນເຜົ່າຄື: ເຜົ່າລາວ, ເຜົ່າຜູ້ໄທ, ເຜົ່າແງະ, ເຜົ່າກະຕາງ, ເຜົ່າຊ່ວຍ, ເຜົ່າຕະໂອ້ຍ, ເຜົ່າອາລັກ, ເຜົ່າກະຕູ, ເຜົ່າລະເວນ ແລະ ເຜົ່າປະໂກະ. ມີພົນລະເມືອງທັງໝົດ 454,386 ຄົນ, ຍິງ 227,325 ຄົນ, ມີອັດຕາຂະຫຍາຍຕົວຂອງພົນລະເມືອງ ສະເລ່ຍໃນລະດັບ 2 ເປີເຊັນ/ປີ, ຮອດປີ 2022 ຈະມີພົນລະເມືອງ 463,474 ຄົນ ແລະ ປີ 2030 ມີພົນລະເມືອງ 543,033 ຄົນ. ເມືອງ ສາລະວັນ ເປັນເມືອງເທດສະບານ ເປັນເມືອງສູນກາງດ້ານ ເສດຖະກິດ ແລະ ວັດທະນະທຳຂອງແຂວງ.

ເສດຖະກິດ (2016-2020) ຂອງແຂວງຂະຫຍາຍຕົວໃນລະດັບ 7 % ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ (GDP) ບັນລຸໄດ້ 20,595 ກວ່າຕື້ກີບ, ທຽບໃສ່ 5ປີກ່ອນເພີ່ມຂຶ້ນ 36.5%, ທຽບໃສ່ແຜນການປະຕິ ບັດ 88.9 %, ໃນນັ້ນ: ກະສິກຳ-ປ່າໄມ້ ເພີ່ມຂຶ້ນ 4.8%, ກວມເອົາ 41.3% ຂອງ GDP, ອຸດສາຫະກຳເພີ່ມຂຶ້ນ 9% ກວມເອົາ 22.2% ຂອງ GDP ແລະ ບໍລິການເພີ່ມຂຶ້ນ 8.2%, ກວມເອົາ 36.5 % ຂອງ GDP ສະເລ່ຍຕໍ່ຄົນ/

ປີ ບັນລຸໄດ້ 9.72 ລ້ານກີບ ຫຼື ເທົ່າກັບ 1,147 ໂດລາ. ການຈັດຕັ້ງ ປະຕິບັດແຜນ 5ປີ ຄັ້ງທີ IX (2021-2025)ແມ່ນຢູ່ໃນໄລຍະ ທີ່ມີຫລາຍ ປັດໃຈ ແລະ ເງື່ອນໄຂສໍາຄັນທາງພາຍໃນ ແລະ ຕ່າງປະເທດ ເຊິ່ງຈະກາຍເປັນທ່າແຮງ ແລະ ໂອກາດໃນການບັນລຸເປົ້າໝາຍຂອງການພັດທະນາ ຕົ້ນຕໍຄື: 1) ປະຊາກອນໜຸ່ມກວມປະມານ 60% ຂອງປະຊາກອນ ທົ່ວແຂວງ, 2) ຄວາມອຸດົມສົມບູນຂອງຊັບພະຍາກອນທໍາມະຊາດ, 3) ໂຄງການກໍ່ສ້າງເຂື່ອນໄຟຟ້າ ຈໍານວນໜຶ່ງຄາດວ່າສໍາເລັດ ແລະ ເລີ່ມຜະລິດເປັນປົກກະຕິ, 4) ບັນດາໂຮງງານຈໍານວນໜຶ່ງກໍ່ໄດ້ລົງມືກໍ່ສ້າງ ແລະ ຄາດຄະເນດໍາເນີນການຜະລິດໃນຊຸມປີຕໍ່ໜ້ານີ້, ເປັນຕົ້ນໂຮງງານແປ້ງມັນຕົ້ນ, ໂຮງ ສີເຂົ້າທັນສະໄໝທີ່ຜະລິດເພື່ອສົ່ງອອກ ແລະ ບັນດາວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ SMEs ພວມໄດ້ຮັບການສົ່ງເສີມ ແລະ ຄາດວ່າຈະຂະຫຍາຍຕົວໄວຂຶ້ນ, 5) ດ້ານການບໍລິການ ເປັນຕົ້ນ, ການຄ້າຂາຍຍົກ, ຂາຍຍ່ອຍ, ເກັບຊື້ ແລະ ການສົ່ງອອກເພີ່ມຂຶ້ນ, ການກໍ່ສ້າງຕະຫລາດໃໝ່, ການກໍ່ສ້າງບ້ານພັກ, ໂຮງແຮມ, ຮ້ານອາຫານ, ການພັດທະນາແຫລ່ງທ່ອງທ່ຽວ ເປັນຕົ້ນ: ຖໍ້າພູຜາສຸກ, ຕາດເລາະ, ຕາດເທວະດາ, ແກ້ງກຸ-ປາກເສດ ແລະ 4 ພັນຊູມຖ້າໄດ້ຮັບການພັດທະນາ ຈະມີແຂກເຂົ້າມາທ່ຽວເພີ່ມຂຶ້ນສ້າງລາຍຮັບຈາກກິດຈະກໍາປິ່ນອ້ອມໄດ້ຫລາຍ, 6) ບັນດາໂຄງການບຸລິມະສິດ ຂອງລັດຖະບານເຊັ່ນ: ຂົວຂ້າມນໍ້າຂອງ ແຫ່ງທີ 6 ລະຫວ່າງ ແຂວງ ສາລະວັນ ກັບຈັງຫວັດອຸບົນ ປະເທດໄທ, ເສັ້ນທາງ 1G ແຍກທາງ 15 ຫາເມືອງພິນ, ແຍກທາງເລກ 20 ເມືອງເລົ່າງາມ ຫາ ປາກຊ່ອງ, ເສັ້ນທາງ S3 ແຍກ 15 ຫາໂກ້ຕາຍຫົງເວີນ ຖ້າໄດ້ກໍ່ສ້າງສໍາເລັດໃນ 5 ປີຕໍ່ໜ້ານີ້ ຈະເປັນເງື່ອນໄຂໃນການເຊື່ອມໂຍງການຄ້າ, ການບໍລິການ ການທ່ອງທ່ຽວ ແລະ ການລົງທຶນ, 7) ບັນດາພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ເປັນຕົ້ນ: ຊົນລະປະທານຄອງເໝືອງກໍໄດ້ມີການສ້ອມແປງ ສາມາດຕອບສະໜອງໃນການຫົດເນື້ອທີ່ການຜະລິດຫລາຍຂຶ້ນ, ການຕອບສະໜອງປັດໃຈການຜະລິດເປັນຕົ້ນ: ແນວພັນ, ຝຸ່ນ, ປຸ໋ຍ ແລະ ປັດໃຈອື່ນໆ ໃນ 5 ເມືອງທົ່ງພຽງຈະເຮັດໃຫ້ຜົນຜະລິດ ທາງດ້ານກະສິກໍາເພີ່ມຂຶ້ນ, 8) ໂຄງການປູກໄມ້ອຸດສາຫະກໍາ, ໄມ້ໃຫ້ໝາກໂຮງງານຊີວະມວນອັດເມັດຈໍານວນໜຶ່ງ ກໍາລັງລິເລີ່ມ ລົງມື ປະຕິບັດ, 9) ສິນຄ້າສົ່ງອອກ ມີຕະຫລາດຮອງຮັບ ຄາດວ່າຈະຂະຫຍາຍຕົວໃນແຕ່ລະປີ ຢູ່ໃນລະດັບ ບໍ່ຫລຸດ 12%.

ໃນໄລຍະ 5 ປີ (2021-2025) ທາງແຂວງມີແຜນສູ້ຊົນເຮັດໃຫ້ເສດຖະກິດຂອງແຂວງ ຂະຫຍາຍຕົວຢ່າງຕໍ່ເນື່ອງຄາດໝາຍສູ້ຊົນເຮັດໃຫ້ເສດຖະກິດ ຂະຫຍາຍຕົວ ໂດຍສະເລ່ຍ 8% ຕໍ່ປີຂຶ້ນໄປ, ສ້າງມູນຄ່າເພີ່ມຕາມລາຄາໃນປີ ( ລວມ 5 ປີ) ໃຫ້ໄດ້ປະມານ 29.138 ກວ່າຕື້ກີບ ໃນນັ້ນ:

+ ກະສິກໍາ-ປ່າໄມ້ ເພີ່ມຂຶ້ນ ໂດຍສະເລ່ຍ 3.5 %, ກວມ 38.3% ຂອງ GDP
+ ຂະແໜງ ອຸດສາຫະກໍາ ເພີ່ມຂຶ້ນ ໂດຍສະເລ່ຍ 10.1 % ກວມ 26.4% ຂອງ GDP
+ ຂະແໜງບໍລິການ ເພີ່ມຂຶ້ນ ໂດຍສະເລ່ຍ 9.4% ກວມ 35.3% ຂອງ GDP

ລາຍໄດ້ ສະເລ່ຍຕໍ່ຄົນ 12 ລ້ານກີບຂຶ້ນໄປ.

ຕາຕະລາງ 2: ແຜນພັດທະນາເສດຖະກິດ-ສັງຄົມ ຂອງ ແຂວງ ສາລະວັນ

| ລ.ດ | ລາຍລະອຽດຂອງແຜນ | ຕົວເລກປະຈຸບັນ | | ແຜນຄາດຄະເນເພີ່ມຂຶ້ນ | | |
|---|---|---|---|---|---|---|
| | | ຫົວ ໜ່ວຍ | ຈຳນວນ | ເພີ່ມຂຶ້ນ (%) | ຫົວ ໜ່ວຍ | ຈຳນວນ |
| **I** | **ຂົງເຂດເສດຖະກິດ** | | | | | |
| 1.1 | ຂະແໜງກະສິກຳ-ປ່າໄມ້ | | | | | |
| 1.1.1 | ວຽກງານກະສິກຳ ແລະ ປູກຝັງ | | | | | |
| 1 | ປູກເຂົ້າ | ໂຕນ | 1,900,000 | | ໂຕນ | 2,000,000 |
| 2 | ປູກກາເຟ, ໄມ້ໃຫ້ໝາກ ແລະ ພືດຕ່າງໆ | ໂຕນ | 917,853 | | ໂຕນ | 2,755,994 |
| 1.1.2 | ວຽກງານລ້ຽງສັດ | | | | | |
| 1 | ງົວ | ໂຕ | 113,000 | 4% | ໂຕ | 117,520 |
| 2 | ຄວາຍ | ໂຕ | 97,000 | 3% | ໂຕ | 99,910 |
| 3 | ໝູ | ໂຕ | 723,000 | 5% | ໂຕ | 759,150 |
| 4 | ແບ້ | ໂຕ | 37,000 | 5% | ໂຕ | 38,850 |
| 5 | ສັດປີກ | ໂຕ | 2,800,000 | 6% | ໂຕ | 2,968,000 |
| 1.1.3 | ວຽກງານຊົນລະປະທານ | | | | | |
| 1 | ຊົນລະປະທານ | ແຫ່ງ | 253 | | ແຫ່ງ | 350 |
| 1.2 | ຂະແໜງອຸດສາຫະກຳ ແລະ ການຄ້າ | | | | | |
| 1 | ໂຮງງານອຸດສາຫະກຳຕ່າງໆ | ແຫ່ງ | 523 | | ແຫ່ງ | |
| 1.3 | ຂະແໜງພະລັງງານ ລະ ບໍ່ແຮ່ | | | | | |
| 1.3.1 | ຂຸດຄົ້ນ ແຮ່ທາດຕ່າງໆຄື: ຖ່ານຫີນ ,ຫີນປູນຫີນພູ,ດິນຖົມພື້ນເຄຫາສະຖານ | ໂຕນ | 1,047,661 | | ໂຕນ | 3,900,116 |
| 1.4 | ຂະແໜງໂຍທາທິການ ແລະ ຂົນສົ່ງ | | | | | |
| 1.4.1 | ວຽກງານກໍ່ສ້າງເສັ້ນທາງ | ກມ | 502.72 | | ກມ | 1,103 |
| 1.4.2 | ວຽກງານນ້ຳປະປາ | ບ້ານ | 59 | | ບ້ານ | |
| II | ຂົງເຂດວັດທະນະທຳ-ສັງຄົມ | | | | | |
| 2.1 | ຂະແໜງສາທາລະນະສຸກ | | | | | |
| 2.1.1 | ໂຮງໝໍແຂວງ 1 ແຫ່ງ | ຕຽງ | 100 | 100% | ຕຽງ | 200 |
| 2.1.2 | ໂຮງໝໍທະຫານ 1 ແຫ່ງ | ຕຽງ | 40 | | ຕຽງ | 40 |
| 2.1.3 | ໂຮງໝໍເມືອງ (7ແຫ່ງ) | ຕຽງ | 300 | | ຕຽງ | 300 |
| 2.1.4 | ສຸກສາລາ (71ແຫ່ງ) | ຕຽງ | 568 | | ຕຽງ | 568 |

| ລ.ດ | ລາຍລະອຽດຂອງແຜນ | ຕົວເລກປະຈຸບັນ | | ແຜນຄາດຄະເນເພີ່ມຂຶ້ນ | | |
|---|---|---|---|---|---|---|
| | | ຫົວໜ່ວຍ | ຈຳນວນ | ເພີ່ມຂຶ້ນ (%) | ຫົວໜ່ວຍ | ຈຳນວນ |
| 2.2 | ຂະແໜງຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ອງທ່ຽວ | | | | | |
| 2.2.1 | ໂຮງແຮມ (10 ແຫ່ງ)(331ຕຽງ) | ຈຳນວນ ນັກທ່ອງທ່ຽວ (ເທື່ອຄົນ) | 491,000 | | ດຶງດູດ ນັກທ່ອງ ໃຫ້ໄດ້ (ຄົນ) | 660,000 |
| 2.2.2 | ເຮືອນພັກ (41 ແຫ່ງ)(673ຕຽງ) | | | | | |
| 2.2.3 | ລີສອດ ( 1 ແຫ່ງ)(10ຕຽງ) | | | | | |
| 2.2.4 | ໂຮງສະເຕ (2 ແຫ່ງ)(9ຕຽງ) | | | | | |
| 2.2.5 | ຮ້ານອາຫານ | ແຫ່ງ | 78 | | ແຫ່ງ | 78 |
| 2.2.6 | ຮ້ານບັນເທີງ | ແຫ່ງ | 31 | | ແຫ່ງ | 31 |
| 2.2.7 | ຮ້ານກິນດື່ມ | ແຫ່ງ | 70 | | ແຫ່ງ | 70 |

(ແຫຼ່ງຂໍ້ມູນ: ຫ້ອງການປົກຄອງ ແລະ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງສາລະວັນ )

ຕາຕະລາງ 3: ປະຊາກອນແຂວງ ສາລະວັນ

| **ລ/ດ** | **ຊື່ເມືອງ** | **ເນື້ອທີ່ ກມ2** | **ຈຳນວນບ້ານ** | **ຄົວເຮືອນ** | **ພົນລະເມືອງ** | **ຍິງ** |
|---|---|---|---|---|---|---|
| 1 | ສາລະວັນ | 2,050 | 124 | 18,675 | 116,202 | 57,052 |
| 2 | ເລົ່າງາມ | 923 | 97 | 15,295 | 79,311 | 39,230 |
| 3 | ວາປີ | 1,309 | 55 | 7,622 | 44,498 | 23,136 |
| 4 | ຄົງເຊໂດນ | 938 | 83 | 11,775 | 50,581 | 36,329 |
| 5 | ລະຄອນເພັງ | 1,416 | 75 | 10,633 | 54,450 | 27,228 |
| 6 | ຕຸ້ມລານ | 873 | 37 | 6,961 | 34,314 | 16,787 |
| 7 | ຕະໂອ້ຍ | 2,087 | 56 | 5,725 | 36,123 | 18,197 |
| 8 | ສະໝ້ວຍ | 1,095 | 51 | 3,388 | 18,905 | 9,346 |
| **ລວມ** | | 10,691 | 578 | 80,074 | 454,386 | 227,322 |

(ແຫຼ່ງຂໍ້ມູນ: ສູນສະຖິຕິປະຈຳເມືອງ 8 ເມືອງ ແລະ ຫ້ອງການພັດທະນາຊົນນະບົດ ປີ 2021)

ໃນປະຈຸບັນ ທົ່ວແຂວງ ມີເນື້ອທີ່ປ່າໄມ້ ທັງໝົດ 694,664 ເຮັກຕາ, ປະກອບມີ ປ່າສະຫງວນແຫ່ງຊາດ 3 ແຫ່ງ ຄື: ປ່າສະຫງວນແຫ່ງຊາດເຊປັ້ງນວນ, ປ່າສະຫງວນແຫ່ງຊາດພູຊຽງທອງ ແລະ ປ່າສະຫງວນແຫ່ງຊາດເຊຊັບ, ມີປ່າປ້ອງກັນແຫ່ງຊາດ 6 ແຫ່ງ ຄື: ປ່າປ້ອງກັນແຫ່ງຊາດ ພູແຕ, ປ່າປ້ອງກັນແຫ່ງຊາດ ຊາຍແດນ ລາວ -

ຫວຽດນາມ, ປ່າປ້ອງກັນແຫ່ງຊາດ ເຊລະນອງ-ພູໂອງ, ປ່າປ້ອງກັນແຫ່ງຊາດ ພູເກົ້າ - ພູນາກ, ປ່າປ້ອງກັນແຫ່ງຊາດ ພູເຊເສັດ ແລະ ປ່າປ້ອງກັນແຫ່ງຊາດ ພູພຽງບໍລະເວນ, ມີປ່າປ້ອງກັນຂອງແຂວງ 3 ແຫ່ງ ຄື: ປ່າປ້ອງກັນພູປ່າຮາ, ປ່າປ້ອງກັນເຊໂດນ 2 ແລະ ປ່າປ້ອງກັນພູຂະໜອນ ແລະ ມີປ່າຜະລິດແຫ່ງຊາດ 2 ແຫ່ງ ຄື: ປ່າຜະລິດແຫ່ງຊາດ ເລົ່າງາມ ແລະ ປ່າຜະລິດແຫ່ງ ຊາດພູຕາລະອາ, ໃນນັ້ນ ມີບ້ານທີ່ນອນຢູ່ໃນ 3 ປະເພດປ່າໄມ້ ຊຶ່ງມີທັງໝົດ 328 ບ້ານ ເທົ່າກັບ 57% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ, ໃນນັ້ນ ມີບ້ານທີ່ນອນໃນເຂດປ່າສະຫງວນແຫ່ງຊາດ ຈຳນວນ 133 ບ້ານ, ບ້ານນອນໃນເຂດປ່າປ້ອງກັນ 102 ບ້ານ ແລະ ບ້ານນອນໃນເຂດປ່າຜະລິດ 93 ບ້ານ




ຮູບທີ 5: ແຜນທີ ສາມປະເພດປ່າໄມ້ ແຂວງສາລະວັນ.

ຕາຕະລາງ 4: ເນື້ອທີ່ດິນປ່າໄມ້ ຂອງແຂວງສາລະວັນ

| ລ/ດ | ປະເພດການນຳໃຊ້ທີ່ດິນ | ລະຫັດ | ເນື້ອທີ່ (ຮຕ) | ເປີເຊັນ |
|---|---|---|---|---|
| 1 | ທີ່ດິນປ່າຜະລິດແຫ່ງຊາດ | F_1 | 136,352 | 12.75 |
| 2 | ທີ່ດິນປ່າປ້ອງກັນແຫ່ງຊາດ | F_3 | 221,402 | 20.71 |
| 3 | ທີ່ດິນປ່າປ້ອງກັນຂອງແຂວງ | F_32 | 24,803 | 2.32 |
| 4 | ທີ່ດິນປ່າສະຫງວນແຫ່ງຊາດ | F_2 | 250,731 | 23.45 |
| 5 | ທີ່ດິນປ່າສະຫງວນຂອງເມືອງ | F_23 | 3,150 | 0.29 |
| 6 | ທີ່ດິນ ປ່າຊົມໃຊ້ຂອງບ້ານ | F_12 | 58.226 | 5.45 |
| **ລວມ** | | | **694,664** | 64.98 |

(ແຫຼ່ງຂໍ້ມູນ: ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທາມະຊາດແບບຮອບດ້ານ ແຂວງ ສາລະວັນ ປີ 2020)

ການນຳໃຊ້ທີ່ດິນໃນຂອບເຂດແຂວງ ສາລະວັນ ແບ່ງອອກເປັນ 8 ປະເພດເຊິ່ງການນຳໃຊ້ທີ່ດິນແຕ່ລະເພດແມ່ນໄດ້ສະແດງໄວ້ໃນຕາຕະລາງທີ 5 :ໃນນັ້ນມີພື້ນທີ່ທັງໝົດ 1,069,100 ເຮັກຕາ ຊຶ່ງໄດ້ສະແດງປະເພດການນຳໃຊ້ທີ່ດິນດັ່ງຕາຕະລາງດັ່ງນີ້:

ຕາຕະລາງ 5: ສັງລວມການນຳໃຊ້ທີ່ດິນ 8 ປະເພດໃນປັດຈຸບັນ ຂອງແຂວງສາລະວັນ

| ລ/ດ | ລະຫັດ | ສີ | ປະເພດການນຳໃຊ້ທີ່ດິນ | ເນື້ອທີດິນປັດຈຸບັນ (ຮຕ) | ເປີເຊັນ |
|---|---|---|---|---|---|
| 1 | A | | ທີ່ດິນ ກະສິກຳ | 323,401.97 | 30.25 |
| 2 | B | | ທີ່ດິນ ປຸກສ້າງ | 9,384.19 | 0.88 |
| 3 | C | | ທີ່ດິນ ວັດທະນະທຳ | 4,948.92 | 0.46 |
| 4 | D | | ທີ່ດິນ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ | 749.56 | 0.07 |
| 5 | F | | ທີ່ດິນ ປ່າໄມ້ | 694,664 | 64.98 |
| 6 | I | | ທີ່ດິນ ອຸດສາຫະກຳ - ບໍ່ແຮ່ | 5,616.13 | 0.53 |
| 7 | R | | ທີ່ດິນ ໂຍທາທິການ ແລະຂົນສົ່ງ | 5,106.33 | 0.48 |
| 8 | W | | ທີ່ດິນ ບໍລິເວນນໍ້າ | 25,228.90 | 2.36 |
| **ລວມ** | | | | **1,069,100** | **100** |

(ແຫຼ່ງຂໍ້ມູນ: ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດແບບຮອບດ້ານ ແຂວງ ສາລະວັນ ປີ 2020)




(ແຫຼ່ງຂໍ້ມູນ: ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທາມະຊາດແບບຮອບດ້ານ ແຂວງ ສາລະວັນ ປີ 2020)

ຮູບທີ 6:ແຜນທີ່ການນຳໃຊ້ທີ່ດິນ ຂອງແຂວງສາລະວັນ




(ແຫຼ່ງຂໍ້ມູນ: ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ສາລະວັນ ປີ 2023)

ຮູບທີ 7:ແຜນທີ່ ດິນກະສິກຳ ແລະ ປ່າໄມ້ ຂອງແຂວງສາລະວັນ

# II. ສະພາບນ້ຳໃຕ້ດິນ

## 2.1. ນ້ຳໃຕ້ດິນ

### 2.1.1. ທໍລະນີສາດ

ທໍລະນີສາດ ຂອງແຂວງ ສາລະວັນ ໂດຍອີງໃສ່ສະພາບພູມສັນຖານ, ຊັ້ນອຸທົກກທໍລະນີ, ພູມອາກາດ ແລະ ອື່ນໆ ພົບວ່າ ຊັ້ນໃຫ້ນ້ຳ ໃນເຂດນີ້ແມ່ນປະກອບດ້ວຍ ຊັ້ນໂພ້ງດິນ-ໂພ້ງຫີນ (Basement), ຊັ້ນຫີນອັດແໜ້ນປົນແຮ່ທາດ (Schists), ຊັ້ນຫີນພູໄຟ (Volcanic), ຊັ້ນຫີນດຶກດຳບັນ (Sedimentary Paleozoic), ຊັ້ນຫີນໜາມພູໄຟ-ຫີນໜາມໜໍ່ (Karstic), ຊັ້ນຫີນໃນຍຸກຫີນ (Sedimentary -Mesozoic), ຊັ້ນດິນຕົມ (Alluvial) ແລະ ແບ່ງອອກເປັນ 4 ກຸ່ມໃຫຍ່ດ້ວຍກັນຄື: ກຸ່ມຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ (Basement and Bedrock), ກຸ່ມຊັ້ນຫີນປາຍຍຸກດຶກດຳບັນ (Late Paleozoic), ກຸ່ມຊັ້ນຍຸກຫີນ (Mesozoic) ແລະ ກຸ່ມຊັ້ນຕະກອນລຸ່ມນ້ຳ (Alluvial sediments).

- **ກຸ່ມ 1 ຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ (Basement and bedrock)**

ໄດ້ມີການລະບຸຊັ້ນຫີນໃນກຸ່ມນີ້ຊຶ່ງແບ່ງອອກເປັນ 3 ປະເພດຄື: 1) ຫີນແປ, ຫີນອັກຄະນີ ສ່ວນໃຫ່ຍ ຈະພົບໃນເຂດທາງທິດຕາເວັນອອກຂອງພູ, 2) ຫີນພູໄຟ, ຫີນບາຊານແມ່ນພົບ ຢູ່ພາກໃຕ້ຂອງປະເທດລາວ ມີລັກສະນະຕ່າງ ຈາກຊັ້ນຫີນເກັບນ້ຳປະເພດອື່ນ ເນື່ອງຈາກຄຸນສົມບັດ ຂອງຊັ້ນຫີນດັ່ງກ່າວ ເປັນຊັ້ນຫີນ ສະເພາະພູໄຟ, 3) ຫີນແປຊຶ່ງແມ່ນຫີນໃນຕອນຕົ້ນຂອງຍຸກ ປາລີໂອໂຊອິກ Paleozoic, ເອີ້ນວ່າ Schists ຊຶ່ງເປັນຊັ້ນຫີນ ທີ່ມີການທັບຖົມຈາກແຮ່ທາດຕ່າງໆ ແຕ່ກຸ່ມຫີນນີ້ຈະແຍກຊັ້ນ ອອກຕ່າງຫາກ ໃນຊັ້ນໂພ້ຫີນ ແລະ ຊັ້ນຫີນດານ.

ຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ ຊຶ່ງເປັນຊັ້ນຫີນທີ່ກັກເກັບນ້ຳໃຕ້ດິນໄດ້ໃນປະລິມານໜ້ອຍ ຊຶ່ງການຄືນໂຕຂອງນ້ຳໃນຊັ້ນຫີນປະເພດນີ້ແມ່ນຢູ່ໃນລະດັບຕ່ຳ ປະມານ (0-0.5 ລິດ/ວິນາທີ) ຕາມຂໍ້ມູນ ທີ່ໄດ້ຈາກບັນດາ ບໍ່ນ້ຳໃຕ້ດິນທີ່ມີຢູ່ ໃນຂົງເຂດແມ່ນ້ຳຂອງ ຊຶ່ງມີການຂຸດເຈາະໃນຊັ້ນຫີນປະເພດນີ້ ເຫັນວ່າ ການຄືນໂຕ ຂອງນ້ຳ ກໍ່ອາດຈະຢູ່ໃນລະດັບຕ່ຳ ລະຫ່ວາງ 0.2 ຫາ 0.5 ລິດ/ວິນາທີ. ການກັກເກັບນ້ຳ ໃນຊັ້ນຫີນ ປະເພດນີ້ ແມ່ນຢູ່ໃນ ລະດັບຕ່ຳປະມານ 420 ມມ, ຢູ່ໃນລະດັບຄວາມເລິກຂອງຊັ້ນດິນ 30 ແມັດ. ຊັ້ນຫີນປະເພດນີ້ແມ່ນກວມພື້ນທີ່ 14% ໃນເຂດພູທີ່ຕິດກັບຊາຍແດນຂອງປະເທດຫວຽດນາມ ແລະ ຊັ້ນຫີນ ທັງສອງປະເພດນີ້ ແມ່ນສາມາດສະ ໜອງ ນ້ຳໄດ້ພຽງແຕ່ 3% ຂອງການກັກເກັບນ້ຳໃນຊັ້ນໃຕ້ດິນທີ່ຢູ່ໃນລະດັບຕື້ນ.

ຊັ້ນດິນພູໄຟ ໃນສປປ ລາວ ສ່ວນໃຫຍ່ແລ້ວແມ່ນຄົ້ນພົບຢູ່ເຂດພາກໃຕ້ ໃນພື້ນທີ່ຮາບສູງ ຂອງພູພຽງບໍລະເວນແຕ່ຂໍ້ມູນທາງດ້ານປະລິມານນ້ຳໃຕ້ດິນໃນຊັ້ນດິນພູໄຟຂອງປະເທດ ແມ່ນມີຈຳກັດ ໂດຍອີງຕາມການສຶກສາໃນເບື້ອງຕົ້ນເຫັນວ່າຊັ້ນດິນປະເພດນີ້ ສາມາດສະໜອງນ້ຳໃຕ້ດິນໄດ້ພຽງແຕ່ 3.3 ລິດຕໍ່ວິນາທີ. ລະບົບຊັ້ນໃຕ້ດິນຄາດວ່າຈະເປັນປະເພດຊັ້ນດິນທີ່ແຕກຕ່າງກັນ ແລະ ອັດຕາການແຜ່ກະຈາຍ ແມ່ນສາມາດກະຈ່າຍໄດ້ແຕ່ 10 ຫາ 100 ແມັດກ້ອນຕໍ່ມື້ຂອງພື້ນທີ່ ທີ່ເໝາະສົມ. ຈາກການສຶກສາໃນພາກສະໜາມເຫັນວ່າ ບ້ານສ່ວນໃຫຍ່ທີ່ຕັ້ງຢູ່ໃນເຂດພື້ນທີ່ຕ່ຳ ແມ່ນມີການນຳໃຊ້ນ້ຳຈາກຊັ້ນຫີນພູໄຟ ທີ່ມີຄວາມເລິກ ລະຫ່ວາງ 10-30 ແມັດ.

- **ກຸ່ມທີ່ 2 ຊັ້ນຫີນປາຍຍຸກດຶກດຳດັບ (Late Paleozoic)**

ກຸ່ມນີ້ປະກອບດ້ວຍຫີນຕະກອນໜາ ໃນຊ່ວງປາຍຂອງຍຸກ Paleozoi ເປັນຊັ້ນຫີນຕະກອນ ທີ່ພົບໃນພື້ນທີ່ສູງຂອງພາກກາງ ແລະ ພາກເໜືອ ຂອງປະເທດລາວ, ຫີນກຸ່ມນີ້ ເປັນ ຫີນຊາຍ Permian ແລະ Paleozoic ເຊິ່ງແຍກອອກເປັນແຕ່ລະປະເພດເນື່ອງຈາກມີຄຸນສົມບັດທີ່ແຕກຕ່າງກັນ.

ຊັ້ນຫີນປູນແມ່ນພົບເຫັນຢູ່ທາງພາກເໜືອຂອງພື້ນທີ່ແຂວງວຽງຈັນແຕ່ໂດຍທົ່ວໄປແລ້ວມັນຈະຝັງຢູ່ພາຍໃຕ້ການກໍ່ຕົວໃນຮູບແບບອື່ນ ຈາກຂໍ້ມູນທີ່ມີໃນບາງສ່ວນທີ່ສາມາດເກັບໄດ້ເທົ່ານັ້ນ. ອີງຕາມຂໍ້ມູນທີ່ມີຢູ່ຄາດວ່າ ການສະໜອງນໍ້າຈະຢູ່ໃນປະມານ 0.1-1 ລິດ/ວິນາທີ ເທົ່າກັບ 5% ປະລິມານຂອງການກັກເກັບນໍ້າປະມານ 1,575 ມມ ໃນຄວາມເລິກ 30 ແມັດ.

❖ **ກຸ່ມທີ 3 ຊັ້ນຍຸກຫີນ (Mesozoic)**

ຫີນກຸ່ມນີ້ປະກອບດ້ວຍ ຫີນຕະກອນທີ່ມີຄວາມໜາ (ຫີນຊາຍ, ຫີນ siltstones ແລະ ອື່ນໆ) ແລະ ມີລັກສະນະທີ່ແຕກຕ່າງກັນ. ແຕ່ເຖິງຢ່າງໃດກໍ່ຕາມ ສ່ວນຕ່າງໆຂອງຫີນກຸ່ມນີ້ ຈະແຕກຕ່າງກັບຫີນຕະກອນ ໃນກຸ່ມອື່ນ. ໃນປະເທດລາວ ໄດ້ພົບເຫັນຫີນກຸ່ມນີ້ຢູ່ຫຼາຍຂົງເຂດ ລວມໄປເຖິງ ທາງພາກເໜືອ ແລະ ພາກກາງ. ນອກນັ້ນຍັງຂະຫຍາຍໄປໃນເຂດທົ່ງພຽງທາງພາກໃຕ້ ທີ່ເຊື່ອມໃສ່ໜ່ວຍພູໂຄຣາດ ຮາດຊະອາຈັກໄທ ແລະ ເອີ້ນວ່າ ຊັ້ນຫີນຕະກອນ Mesozoic.

❖ **ກຸ່ມທີ່ 4 ຊັ້ນຕະກອນລຸ່ມນໍ້າ(Alluvial Sediments)**

ໃນກຸ່ມນີ້ເປັນຫີນຮູບແບບຂອງ Neogene ແລະ Quaternary ຂອງຊັ້ນ Alluvial ແມ່ນພົບ ຢູ່ໃນເຂດທົ່ງພຽງ ແຂວງວຽງຈັນ, ສະຫວັນນະເຂດ ແລະ ລຽບຕາມແມ່ນໍ້າຂອງ. ເຖິງວ່າ ບໍ່ໄດ້ມີການ ບັນທຶກໄວ້ລະອຽດກໍ່ຕາມ ແຕ່ຍັງສາມາດພົບແຫຼ່ງນໍ້າຂະໜາດນ້ອຍໄດ້ຕາມແຄມແມ່ນໍ້າໃນເຂດເນີນສູງ.

ການປ່ຽນແປງລະດັບນໍ້າ (Potentiometric surface) ເປັນຕົວຊີ້ວັດໜຶ່ງ, ທີ່ສະແດງໃຫ້ເຫັນເຖິງທິດທາງການໄຫຼຂອງນໍ້າ, ການປ່ຽນແປງລະດັບນໍ້າຕາມຊັ້ນດິນ, ຊັ້ນຫີນຕະກອນ ອາລູວຽມ. ປະເທດລາວ ສ່ວນໃຫ່ຍ ເປັນລັກສະນະພູມສັນຖານສູງ ແລະ ມີສາຍນໍ້າໄຫຼຜ່ານແຕ່ເໜືອຮອດໃຕ້ ແມ່ນໍ້າທີ່ໃຫ່ຍກວ່າໝູ່ແມ່ນ ແມ່ນໍ້າຂອງ ແລະມີແມ່ນໍ້າສາຂາເປັນຈໍານວນຫຼາຍ ທິດທາງການໄຫຼຂອງນໍ້າໃຕ້ດິນ ແມ່ນໄປຕາມ ລັກສະນະ ພູມສັນຖານ ທາງດ້ານທໍລະນີ ມີລັກສະນະຄືກັບການໄຫຼຂອງນໍ້າໜ້າດິນ ຕົວຢ່າງ: ເຂດທົ່ງພຽງວຽງຈັນມີລັກສະນະຄືກັນກັບລັກສະນະທາງທໍລະນີສັນຖານ ຫຼື ຄືກັນກັບພູມສັນຖານຂອງທົ່ງພຽງວຽງຈັນ. ໂດຍທົ່ວໄປແລ້ວນໍ້າໃຕ້ດິນຈະໄຫຼແຕ່ພູພະນັງ ແລະພູເຂົາຄວາຍລົງມາຫາສາຍນໍ້າງື່ມ. ເຖິງຢ່າງໃດກໍ່ຕາມ, ບໍ່ໝາຍຄວາມວ່ານໍ້າຈະໄຫຼ ຈາກພູເຫຼົ່ານັ້ນທັງໝົດ, ມັນກໍ່ມີທິດທາງການໄຫຼມາຈາກບ່ອນອື່ນ ໂດຍຜ່ານທົ່ງພຽງວຽງຈັນ. ຄວາມຈິງແລ້ວການໄຫຼ ແມ່ນໄຫຼໄປຕາມລັກສະ ນະການປະກອບສ້າງທາງພູມສັນຖານ; ການໄຫຼຂອງນໍ້າໃຕ້ດິນ ສ່ວນໃຫ່ຍ ຈາກຈອມພູ ແລະ ເນີນພູ. ດັ່ງສະແດງໃຫ້ເຫັນໃນແຜນທີ່ລຸ່ມນີ້:

ແຜນທີ່ ທໍລະນີສາດ ແຂວງ ສາລະວັນ




(ແຫຼ່ງຂໍ້ມູນ: Viossanges,M.2017)

ຮູບທີ 8: ແຜນທີ່ທໍລະນີສາດຂອງ ແຂວງ ສາລະວັນ

### 2.1.2. ອຸທົກທໍລະນີສາດ ແລະ ປະລິມານນ້ຳໃຕ້ດິນ

ໂດຍອີງໃສ່ລັກສະນະທາງທໍລະນີສາດ ຂອງ ແຂວງ ສາລະວັນ, ແມ່ນມີປະລິມານນ້ຳໃຕ້ດິນທີ່ແຕກຕ່າງກັນຕາມແຕ່ລະປະເພດຊັ້ນຫີນອຸ້ມນ້ຳ. ໃນຮູບທີ 7 ສະແດງໃຫ້ເຫັນ 7 ປະເພດຂອງຊັ້ນຫີນອຸ້ມນ້ຳ (1) ຊັ້ນໂພ້ງດິນ-ໂພ້ງຫີນ(Basement); (2) ຊັ້ນຫີນອັດແໜ້ນປົນແຮ່ທາດ(Schists); (3) ຊັ້ນຫີນພູໄຟ (Volcanic); (4) ຊັ້ນຫີນດຶກດຳບັນ (Sedimentary Paleozoic); (5) ຊັ້ນຫີນໜາມພູໄຟ-ຫີນໜາມໜໍ່ (Karstic), (6) ຊັ້ນຫີນໃນຍຸກຫີນ , (Sedimentary -Mesozoic); (7) ຊັ້ນດິນຕົມ (Alluvial)ເຊິ່ງມີລາຍລະອຽດຕ່າງໆດັ່ງນີ້:

1. **ຊັ້ນໂພ້ງດິນ-ໂພ້ງຫີນ(Basement):** ແມ່ນພົບເຫັນໜ້ອຍທີ່ສຸດ ກວມເອົາ 1% ຂອງ ແຂວງ ສາລະວັນ ກຸ່ມຫີນນີ້ແມ່ນ ພົບເຫັນໃນເຂດເມືອງ ຕະໂອ້ຍ ເມືອງດຽວເທົ່ານັ້ນຊຶ່ງພົບເຫັນເຂດບ້ານ ປະເຕມ, ປີໂກະ ແລະ ບ້ານທົ່ງຊະ ; ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009), ຄວາມໜາຂອງຊັ້ນໂພ້ງດິນ-ໂພ້ງຫີນນີ້ອາດຈະມີຄວາມໜາຕັ້ງແຕ່ 500 ແມັດ ຫາ 1,000 ແມັດ. ໃນປະເທດລາວ ຍັງບໍ່ມີບົດລາຍງານສະເພາະ ກ່ຽວກັບບໍ່ນ້ຳບາດານທີ່ເຈາະໃນຊັ້ນຫີນອຸ້ມນ້ຳນີ້. ຈາກການສຶກສາ, ບາງຂໍ້ມູນພື້ນຖານສາມາດຫາໄດ້ ໂດຍອີງໃສ່ການສຶກສາໃນພາກພື້ນແມ່ນ້ຳຂອງເຫັນວ່າ ຄວາມສາມາດໃນການສະໜອງນ້ຳຂອງຊັ້ນຫີນອຸ້ມນ້ຳປະເພດນີ້ ແມ່ນ ຕ່ຳຫຼາຍ ໂດຍ

ຈະມີນ້ຳໃຕ້ດິນຢູ່ໃນຮອຍແຕກຂອງຫີນເທົ່ານັ້ນ. ຄາດວ່າປະລິມານການໄຫຼວຽນຂອງນ້ຳຢູ່ ລະຫວ່າງ 0-0.5 ລິດຕໍ່ວິນາທີ.

**2. ຊັ້ນຫີນອັດແໜ້ນປົນແຮ່ທາດ(Schists):** ຊັ້ນຫີນອູ້ມນ້ຳປະເພດນີ້ແມ່ນສາມາດພົບເຫັນນ້ຳ ຢູ່ໃນຮອຍແຕກພາຍໃນຫີນປ່ຽນຮູບ ທີ່ເກີດໃນຍຸກ Cambrian. ກວມເອົາ 1% ຂອງເນື້ອທີ່ ແຂວງ ສາລະວັນ ໂດຍພົບເຫັນໃນເຂດບ້ານ ອາແດງກູຕາຍ ເມືອງ ສະໝ້ອຍ ແລະ ບ້ານ ລຶກດຶງ, ປີໂກະ, ສົມປາຢອນ ແລະ ບ້ານ ທົງກາໄຣ່ ເມືອງ ຕະໂອ້ຍ ທາງທິດຕາເວັນອອກ ໃກ້ກັບຊາຍແດນແຂວງ ເຊກອງ ແລະ ຊາຍແດນ ປະເທດ ສສ ຫວຽດນາມ. ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009), ຊັ້ນຫີນອູ້ມນ້ຳປະເພດນີ້ ໜາຫຼາຍ ແລະອາດຈະມີຄວາມໜາຕັ້ງແຕ່ 1,500 ແມັດ ຫາ 1,700 ແມັດ. ປັດຈຸບັນຍັງບໍ່ທັນມີການສຶກສາກ່ຽວກັບຊັ້ນຫີນອູ້ມນ້ຳປະເພດນີ້ຢູ່ແຂວງສາລະວັນ. ຍ້ອນວ່າຊັ້ນຫີນອູ້ມນ້ຳນີ້ພົບເຫັນແຖວເຂດພູສູງ, ນ້ຳໃຕ້ດິນຈະແຊກຊຶມເຂົ້າມາຕາມຮອຍແຕກ ແລະ ໄຫຼອອກ ເປັນ ນ້ຳອອກບໍ່ ຫຼື ນ້ຳລິນ ຢູ່ບ່ອນຕ່ຳກວ່າ. ຄວາມສາມາດໃນການສະ ໜອງນ້ຳ ຈະມີປະລິມານຈຳກັດ ແລະ ມີນ້ຳຢູ່ບາງເຂດເທົ່ານັ້ນ. ນ້ຳໃຕ້ດິນຈະຖືກກັກເກັບ ແລະ ໄຫຼວຽນຢູ່ໃນສ່ວນທີ່ເປັນຮອຍແຕກ ແລະ ຜຸພັງຂອງຫີນ. ການສຶກສາບາງເຂດໃນລາວພົບວ່າ ການຂຸດເຈາະບໍ່ນ້ຳບາດານ ໃນຊັ້ນຫີນອູ້ມນ້ຳປະເພດນີ້ ມີປະລິມານການໄຫຼວຽນຂອງນ້ຳຢູ່ ລະຫວ່າງ 0.2-0.5 ລິດຕໍ່ວິນາທີ, ແຕ່ກໍມີຄວາມສ່ຽງທີ່ຮູຂຸດເຈາະນັ້ນຈະບໍ່ມີນ້ຳ ຫຼື ບົກແຫ້ງ.

**3. ຊັ້ນຫີນພູໄຟ (Volcanic):** ແມ່ນກວມເອົາ 18% ຂອງເນື້ອທີ່ ແຂວງສາລະວັນ ພົບເຫັນຢູ່ເມືອງ ສາລະວັນ, ຄົງເຊໂດນ, ວາປີ ແລະ ເມືອງ ເລົ່າງາມ ແລະ ພົບເຫັນຢູ່ຊັ້ນເທິງສຸດຂອງຊັ້ນຫີນຊາຍ. ຄວາມໜາຂອງຊັ້ນຫີນອູ້ມນ້ຳນີ້ແມ່ນມີຄວາມແຕກຕ່າງກັນ. ຄວາມຫນາຂອງຊັ້ນຫີນພູໄຟແມ່ນ ຢູ່ປະມານ 30 ແມັດ ຫາ 100 ແມັດ ໂດຍອີງໃສ່ການສຶກສາຈຳນວນຫນຶ່ງໃນລາວໄດ້ສະແດງໃຫ້ເຫັນວ່າ ປະສິດທິພາບການຈ່າຍນ້ຳໃນຊັ້ນຫີນພູເຂົາໄຟແມ່ນມີຫຼາຍ (Pavelic, 2020; Viossanges, M. 2017; 1995). ໃນຊັ້ນຫີນອູ້ມນ້ຳປະເພດນີ້, ແມ່ນສາມາດເກັບກັກນ້ຳຕາມຮອຍແຕກແຫງຕ່າງໆ. ປະລິມານການໄຫຼວຽນຂອງນ້ຳຢູ່ ລະຫວ່າງ 0.3-3 ລິດຕໍ່ວິນາທີ.

**4. ຊັ້ນຫີນດຶກດຳບັນ(Sedimentary Paleozoic):** ແມ່ນ ກວມເອົາ 5% ຂອງເນື້ອທີ່ ແຂວງ ສາລະວັນ ຊັ້ນຫີນອູ້ມນ້ຳປະເພດນີ້ພົບເຫັນຢູ່ໃນເຂດເມືອງ ສາລະວັນ, ເມືອງ ສະໝ້ອຍ ແລະ ເມືອງຕຸ້ມລານ ຕາມທິດຕາເວັນອອກຂອງ ເມືອງ ສາລະວັນ ແລະ ຕິດກັບຊາຍແດນແຂວງ ເຊກອງເປັນສ່ວນຫຼາຍ. ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009), ຊັ້ນຫີນອູ້ມນ້ຳປະເພດນີ້ແມ່ນມີຄວາມໜາຕັ້ງແຕ່ 1,000 ແມັດ ຫາ 1,800 ແມັດ. ນ້ຳໃຕ້ດິນແມ່ນມີຢູ່ຕາມ ຮອຍແຕກ ແລະ ພາກສ່ວນຜຸພັງຂອງຫີນ. ອີງຕາມຂໍ້ມູນທີ່ມີຢູ່ໃນປະເທດລາວ, ເຫັນວ່າ ບໍ່ນ້ຳບາດານ ທີ່ຖືກຂຸດເຈາະໃນຊັ້ນຫີນອູ້ມນ້ຳປະເພດນີ້ ເຫັນວ່າຄວາມສາມາດໃນການສະໜອງນ້ຳແມ່ນມີປະລິມານນ້ຳທີ່ຈຳກັດ ຫຼື ໜ້ອຍຫຼາຍ. ຄາດຄະເນປະລິມານການໄຫຼວຽນຂອງນ້ຳຢູ່ ລະຫວ່າງ 0.1-1 ລິດຕໍ່ວິນາທີ. ຢ່າງໃດກໍ່ຕາມ, ຊັ້ນຫີນດຶກດຳບັນ ແມ່ນສຳຄັນສຳລັບຊີວິດໃນຊົນນະບົດ ຍ້ອນວ່າເປັນແຫຼ່ງນ້ຳອອກບໍ່ ຫຼື ແຫຼ່ງນ້ຳລິນ ທີ່ນຳໃຊ້ໃນບາງຊຸມຊົນໃນເຂດຊົນນະບົດ.

**5. ຊັ້ນຫີນໜາມພູໄຟ-ຫີນໜາມໝໍ່(Karstic):** ແມ່ນກວມເອົາ 1% ຂອງເນື້ອທີ່ ແຂວງສາລະວັນ ພົບເຫັນຢູ່ເມືອງ ສາລະວັນ ແລະ ເມືອງຕະໂອ້ຍ. ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009),

ຊັ້ນຫີນອູ້ມນໍ້າປະເພດນີ້ແມ່ນມີຄວາມໜາຕັ້ງແຕ່ 240 ແມັດ ຫາ 400 ແມັດ. ປະລິມານການໄຫຼວຽນຂອງນໍ້າຢູ່ ລະຫວ່າງ 0,0-10 ລິດຕໍ່ວິນາທີ.

**6. ຊັ້ນຫີນໃນຍຸກຫີນ (Sedimentary -Mesozoic)**: ແມ່ນກວມເອົາ 69% ຂອງເນື້ອທີ່ແຂວງ ສາລະວັນ ຈະພົບເຫັນໃນເຂດ ເມືອງ ສາລະວັນ, ສະໜ້ວຍ, ຕະໂອ້ຍ, ຕຸ້ມລານ, ຄົງເຊໂດນ, ວາປີ, ລະຄອນເພັງ ແລະ ເມືອງ ເລົ່າງາມ , ຊັ້ນຫີນອູ້ມນໍ້າປະເພດນີ້ແມ່ນຢູ່ກ້ອງຊັ້ນຫີນອັກຄະນີທີ່ເກີດຈາກການໄຫຼຂອງ ລາວາພູເຂົາໄຟ ແລະ ບໍ່ປາກົດໃຫ້ເຫັນຢູ່ເທິງໜ້າດິນ. ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009), ຊັ້ນຫີນອູ້ມນໍ້າ ປະເພດນີ້ແມ່ນມີຄວາມໜາຕັ້ງແຕ່ 240 ແມັດ ຫາ 400 ແມັດ. ຫີນອູ້ມນໍ້າປະເພດນີ້ ນໍ້າໃຕ້ດິນໄດ້ຖືກເກັບກັກໄວ້ ແລະ ໄຫຼຜ່ານ (1) ຊ່ອງຫວ່າງໃນຫີນຊາຍ; (2) ຊັ້ນຫີນຜຸພັງ ແລະ ຮອຍແຕກ. ໂດຍທົ່ວໄປ ນໍ້າຈະໄຫຼວຽນ ແລະ ຖືກເກັບໄວ້ໃນຮອຍແຕກ ຢູ່ລະດັບທີ່ເລິກ ຫຼື ໃນຊັ້ນຫີນຜຸພັງໃກ້ກັບໜ້າດິນ. ອີງຕາມຂໍ້ມູນທີ່ມີຢູ່ໃນປະເທດລາວ, ຊັ້ນຫີນອູ້ມນໍ້າປະເພດນີ້ ມີຄວາມສາມາດໃນການສະໜອງນໍ້າຢູ່ໃນລະດັບປານກາງ ຫາ ດີ, ປະລິມານການໄຫຼວຽນ ຂອງນໍ້າຢູ່ ລະຫວ່າງ 0.1-1.5 ລິດຕໍ່ວິນາທີ. ຈາກປະລິມານດັ່ງກ່າວ ແມ່ນພຽງພໍກັບການສະໜອງນໍ້າໃນຕົວເມືອງ ເຊັ່ນ ໂຄງການ Sunwip ຢູ່ ແຂວງ ສະຫວັນນະເຂດ ທີ່ຕັ້ງຢູ່ເຂດ ຊັ້ນຫີນອູ້ມນໍ້າປະເພດດຽວກັນ ແມ່ນໄດ້ນໍາໃຊ້ນໍ້າ ໃຕ້ດິນ ເປັນແຫຼ່ງຜະລິດນໍ້າປະປາໃນຕົວເມືອງຂະໜາດນ້ອຍ. ຂໍ້ຈໍາກັດ ໃນການພັດທະນາ ການນໍາໃຊ້ນໍ້າໃຕ້ດິນ ໃນ ຊັ້ນຫີນອູ້ມນໍ້າປະເພດນີ້ ແມ່ນຄວາມແຕກຕ່າງກັນພາຍໃນຊັ້ນຫີນ, ປະລິມານການຈ່າຍນໍ້າອາດຈະແຕກຕ່າງກັນຫຼາຍ ຂຶ້ນກັບສະຖານທີ່ ແລະ ການມີ ຫຼື ບໍ່ມີຂອງຮອຍແຕກໃນຫີນ. ຍິ່ງໄປກວ່ານັ້ນ, ຄວາມເຄັມສູງຍັງເປັນບັນຫາທີ່ເກີດ ຂຶ້ນເປັນປະຈໍາໃນຊັ້ນຫີນອູ້ມນໍ້າປະເພດນີ້.

**7. ຊັ້ນດິນຕົມ (Alluvial):** ແມ່ນກວມເອົາ 5% ຂອງເນື້ອທີ່ ແຂວງສາລະວັນ ພົບເຫັນຢູ່ເມືອງ ສາລະວັນ, ວາປີ ແລະ ເມືອງຄົງເຊໂດນ. ອີງຕາມຂໍ້ມູນແຜນທີ່ທໍລະນີສາດ ຂອງພາກໃຕ້ຂອງລາວ (ປີ 2009), ຊັ້ນຫີນອູ້ມນໍ້າ ປະເພດນີ້ແມ່ນມີຄວາມໜາຕັ້ງແຕ່ 240 ແມັດ ຫາ 400 ແມັດ. ປະລິມານການໄຫຼວຽນຂອງນໍ້າຢູ່ ລະຫວ່າງ 0.3-6 ລິດຕໍ່ວິນາທີ.




(ແຫຼ່ງຂໍ້ມູນ: Viossanges,M.2017)

ຮູບທີ 9: ແຜນທີ່ປະສິດທິພາບໃນການຈ່າຍນ້ຳຕາມແຕ່ລະປະເພດຊັ້ນຫີນອູ້ມນ້ຳ ແຂວງ ສາລະວັນ




ຮູບທີ 10: ແຜນທີ່ສະແດງ ຈຸດທີ່ຕັ້ງບ້ານຢູ່ ແຕ່ລະປະເພດຊັ້ນຫີນອູ້ມນ້ຳ ໃນ ແຂວງ ສາລະວັນ

ຕາຕະລາງ 6: ອັດຕາສ່ວນຮ້ອຍຂອງແຕ່ລະປະເພດຊັ້ນຫີນອຸ້ມນ້ຳ ຢູ່ໃນແຕ່ລະເມືອງ

| ລ/ດ | ປະເພດຊັ້ນຫີນອຸ້ມນ້ຳ | ກຸ່ມຊັ້ນຫີນອຸ້ມນ້ຳ | ອັດຕາສ່ວນຮ້ອຍຂອງແຕ່ລະປະເພດຊັ້ນຫີນອຸ້ມນ້ຳ ຢູ່ໃນແຕ່ລະເມືອງ | | | | | | | | ອັດຕາສ່ວນຮ້ອຍຂອງແຕ່ລະປະເພດຊັ້ນຫີນອຸ້ມນ້ຳ ຢູ່ແຂວງສາລະວັນ (%) |
|---|---|---|---|---|---|---|---|---|---|---|---|
| | | | ສາລະວັນ (%) | ສະໝ້ອຍ (%) | ວາປີ (%) | ຕະໂອ້ຍ (%) | ຄົງເຊໂດນ (%) | ລະຄອນເພັງ(%) | ຕຸ້ມລານ (%) | ເລົ່າງາມ (%) | |
| 1 | ຊັ້ນໂພ້ງດິນ-ໂພ້ງຫີນ | ຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ | 0.0 | 0.0 | 0,0 | 5 | 0.0 | 0.0 | 0.0 | 0.0 | 1 |
| 2 | ຊັ້ນຫີນອັດແໜ້ນປົນແຮ່ທາດ | ຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ | 0.0 | 0.23 | 0,0 | 4 | 0.0 | 0.0 | 0.0 | 0.0 | 1 |
| 3 | ຊັ້ນຫີນໜາມພູໄຟ-ຫີນໜາມໜໍ່ | ຊັ້ນຫີນປາຍຍຸກດຶກດຳບັນ | 0,04 | 0.0 | 0,0 | 3 | 0.0 | 0.0 | 0.0 | 0.0 | 1 |
| 4 | ຊັ້ນຫີນດຶກດຳບັນ | ຊັ້ນຫີນປາຍຍຸກດຶກດຳບັນ | 18.69 | 0.0 | 0,0 | 4 | 0.0 | 0.0 | 3 | 0.0 | 5 |
| 5 | ຊັ້ນຫີນໃນຍຸກຫີນ | ຊັ້ນຍຸກຫີນ | 46.44 | 99.77 | 79 | 84 | 41 | 100 | 97 | 3 | 18 |
| 6 | ຊັ້ນຫີນພູໄຟ | ຊັ້ນໂພ້ງຫີນ ແລະ ຊັ້ນຫີນດານ | 26.16 | 0.0 | 15 | 0.0 | 29 | 0.0 | 0.0 | 97 | 69 |
| 7 | ຊັ້ນດິນຕົມ | ກຸ່ມຊັ້ນດິນຕະກອນລຸ່ມນ້ຳ | 8.67 | 0.0 | 6 | 0.0 | 30 | 0.0 | 0.0 | 0.0 | 5 |
| ລວມ | | | 100 | 100 | 100 | 100 | 100 | 100 | 100 | 100 | 100 |




ຮູບທີ 11: ສົມທຽບອັດຕາສ່ວນຮ້ອຍຂອງຊັ້ນທຳລະນີຕໍ່ເນື້ອທີ່ ແຂວງ ສາລະວັນ

### 2.1.3. ການເຂົ້າເຖິງນໍ້າໃຕ້ດິນ

ອີງຕາມການວິເຄາະທາງລະບົບຂໍ້ມູນຂ່າວສານທາງພູມສາດ (GIS) ຂອງ ແຜນທີ່ທໍລະນີສາດ ມາດຕາສ່ວນ 1:500,000 ຂອງແຂວງສາລະວັນ ແລະ ຂໍ້ມູນ ຈາກການສໍາຫຼວດສໍາມະໂນຄົວ ປີ 2015 ແມ່ນມີລາຍລະອຽດດັ່ງນີ້:

1. **ຊັ້ນໂພ້ງດິນ-ໂພ້ງຫີນ(Basement):** ມີປະມານ 3 ບ້ານ ໃນຊັ້ນໂພ້ງດິນ-ໂພ້ງຫີນ ແລະ ສັງເກດເຫັນວ່າ ມີການນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນ ຈໍານວນ 2 ບ້ານ ແລະ ອີກຈໍານວນ 1 ບ້ານແມ່ນນໍາໃຊ້ນໍ້າໃຕ້ດິນ.
2. **ຊັ້ນຫີນອັດແໜ້ນປົນແຮ່ທາດ(Schists):** ມີປະມານ 5 ບ້ານ ທີ່ຕັ້ງຢູ່ເທິງພື້ນທີ່ຊັ້ນຫີນອຸ້ມນໍ້າປະເພດນີ້ ແລະ ສັງເກດເຫັນວ່າມີຈໍານວນ 1 ບ້ານທີ່ນໍາໃຊ້ນໍ້າໃຕ້ດິນ ນອກຈາກນັ້ນແມ່ນ ນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນ ແລະ ຈາກສາຍແມ່ນໍ້າທໍາມະຊາດ. ນໍ້າຈາກພູນີ້ ແມ່ນມາຈາກ ຊັ້ນຫີນອຸ້ມນໍ້າປະເພດ ຊັ້ນຫີນອັດແໜ້ນປົນແຮ່ທາດ, ດັ່ງນັ້ນ ຈຶ່ງມີຄວາມສໍາຄັນຕ້ອງໄດ້ປົກປັກຮັກສາພື້ນທີ່ ເພື່ອການເຕີມປະລິມານນໍ້າໃຕ້ດິນ (Recharge) ຢູ່ເຂດເທິງພູ.
3. **ຊັ້ນຫີນໜາມພູໄຟ-ຫີນໜາມໝໍ່(Karstic):** ມີທັງໝົດ 6 ບ້ານ ໃນນັ້ນມີຈໍານວນ 3 ບ້ານ ທີ່ນໍາໃຊ້ນໍ້າໃຕ້ດິນ, ຈໍານວນ 2 ບ້ານແມ່ນນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນ ແລະ ອີກຈໍານວນ 1 ບ້ານ ແມ່ນນໍາໃຊ້ນໍ້າຈາກສາຍນໍ້າທໍາມະຊາດ.
4. **ຊັ້ນຫີນດຶກດໍາບັນ(Sedimentary Paleozoic):** ມີຈໍານວນ 25 ບ້ານ ທີ່ຢູ່ໃນພື້ນທີ່ຂອງຊັ້ນຫີນອຸ້ມນໍ້າປະເພດນີ້, ເຊິ່ງມີຈໍານວນ 16 ບ້ານ ທີ່ນໍາໃຊ້ນໍ້າໃຕ້ດິນເຂົ້າໃນຊີວິດປະຈໍາວັນ ຮອງລົງມາແມ່ນນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນ ແລະ ນໍ້າຈາກແມ່ນໍ້າທໍາມະຊາດ.
5. **ຊັ້ນຫີນພູໄຟ (Volcanic):** ມີຈໍານວນທັງໝົດ 203 ບ້ານທີ່ນອນໃນຊັ້ນດິນອຸ້ມນໍ້າປະເພດນີ້ ໃນນັ້ນມີຈໍານວນ 115 ບ້ານທີ່ນໍາໃຊ້ນໍ້າໃຕ້ດິນເຂົ້າໃນຊີວິດປະຈໍາວັນ ຮອງລົງມາແມ່ນນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນຈໍານວນ 52 ບ້ານ ແລະ ຮອງລົງມາແມ່ນນໍາໃຊ້ນໍ້າຈາກສາຍນໍ້າທໍາມະຊາດ ສ່ວນການຊົມໃຊ້ນໍ້າປະປາເຂົ້າໃນຊີວິດປະຈໍາວັນແມ່ນມີພຽງ 3 ບ້ານເທົ່ານັ້ນ.
6. **ຊັ້ນຫີນໃນຍຸກຫີນ (Sedimentary -Mesozoic):** ມີຈໍານວນ 372 ບ້ານທີ່ຕັ້ງຢູ່ເທິງພື້ນທີ່ຫີນອຸ້ມນໍ້ານີ້, ໃນນັ້ນໄດ້ມີຈໍານວນ 235 ບ້ານທີ່ໄດ້ນໍາໃຊ້ນໍ້າໃຕ້ດິນ ເປັນແຫຼ່ງສະໜອງນໍ້າຕົ້ນຕໍ ຮອງລົງມາແມ່ນນໍາໃຊ້ນໍ້າຈາກພູ ຫຼື ນໍ້າລິນ ແລະ ຮອງລົງມາແມ່ນນໍ້າໃຊ້ນໍ້າຈາກສາຍນໍ້າທໍາມະຊາດ, ສ່ວນນໍ້າປະປາແມ່ນມີພຽງ 7 ບ້ານທີ່ໄດ້ນໍາໃຊ້ ເຫັນວ່າການນໍາໃຊ້ນໍ້າໃຕ້ດິນໃນຊັ້ນນີ້ເປັນຈໍານວນຫຼາຍ, ສິ່ງນີ້ຊີ້ໃຫ້ເຫັນເຖິງຄວາມສໍາຄັນຂອງຊັ້ນຫີນອຸ້ມນໍ້າປະເພດນີ້ຕໍ່ການນໍາໃຊ້ນໍ້າໃຕ້ດິນ.
7. **ຊັ້ນດິນຕົມ (Alluvial)** ມີຈໍານວນ 128 ບ້ານທີ່ຕັ້ງຢູ່ເທິງພື້ນທີ່ຫີນອຸ້ມນໍ້ານີ້, ໃນນັ້ນໄດ້ມີຈໍານວນ 74 ບ້ານທີ່ໄດ້ນໍາໃຊ້ນໍ້າໃຕ້ດິນເຂົ້າໃນຊີວິດປະຈໍາວັນ ເປັນແຫຼ່ງສະໜອງນໍ້າຕົ້ນຕໍຮອງລົງມາແມ່ນນໍ້າໃຊ້ນໍ້າຈາກສາຍນໍ້າທໍາມະຊາດ, ສ່ວນນໍ້າປະປາແມ່ນມີພຽງ 6 ບ້ານທີ່ໄດ້ນໍາໃຊ້

ແຜນທີ່ ສະແດງ ປະເພດແຫຼ່ງນໍາໃຊ້ນ້ຳຢູ່ແຕ່ລະບ້ານ ໃນ ແຂວງ ສາລະວັນ




(ແຫຼ່ງຂໍ້ມູນ: ການສຳຫຼວດປະຊາກອນ, ສູນສະຖິຕິແຫ່ງຊາດ ປີ 2015)

ຮູບທີ 12: ແຜນທີ່ ປະເພດແຫຼ່ງນໍາໃຊ້ນ້ຳຢູ່ແຕ່ລະບ້ານ ແຂວງສາລະວັນ

### 2.1.4. ລະດັບນ້ຳ ແລະ ທິດທາງການໄຫຼ ຂອງນ້ຳໃຕ້ດິນ

ເນື່ອງຈາກບໍ່ມີຂໍ້ມູນການນໍາໃຊ້ນ້ຳໃຕ້ດິນ, ບໍ່ທັນມີການວັດແທກລະດັບນ້ຳ ເພື່ອປະເມີນທິດທາງການໄຫຼຂອງນ້ຳໃຕ້ດິນຈາກຊັ້ນໂພ້ງດິນ-ໂພ້ງຫີນ, ຊັ້ນຫີນອັດແໜ້ນປົນແຮ່ທາດ, ຊັ້ນຫີນປູນ, ຊັ້ນຫີນດຶກດຳບັນພາຍໃນແຂວງສາລະວັນ, ຈິ່ງບໍ່ສາມາດປະເມີນທິດທາງການໄຫຼຂອງນ້ຳຊັ້ນຫີນອູ້ມນ້ຳປະເພດນີ້ໄດ້, ແຕ່ຄາດວ່ານ້ຳໃຕ້ດິນຈະໄຫຼໄປຕາມລັກສະນະຂອງພູມສັນຖານ, ໄຫຼຜ່ານຮອຍແຕກ ແລະ ໄຫຼອອກຜ່ານນ້ຳອອກບໍ່ ແລະ ໄຫຼຊຶມເຂົ້າໃກ້ກັບຕີນພູ. ຢ່າງໃດກໍ່ຕາມ, ບາງຄັ້ງ ຮອຍແຕກໃນຫີນ ສາມາດສົ່ງຜົນກະທົບຕໍ່ທິດທາງຂອງການໄຫຼຂອງນ້ຳໃຕ້ດິນໄດ້.

# III. ການນຳໃຊ້ນ້ຳໃຕ້ດິນ ໃນປະຈຸບັນ

## 3.1. ອຸປະໂພກ ແລະ ບໍລິໂພກ.

ການນຳໃຊ້ນ້ຳໃຕ້ດິນເພື່ອ ອຸປະໂພກ ແລະ ບໍລິໂພກ ຂອງແຂວງ ສາລະວັນ ແມ່ນໄດ້ແບ່ງເປັນ 3 ປະເພດ ຄື: ການນຳໃຊ້ນ້ຳໃນຄົວເຮືອນ, ການນຳໃຊ້ນ້ຳໃນຂະແໜງສາທາລະນະສຸກ ແລະ ການນຳໃຊ້ນ້ຳເຂົ້າໃນວຽກງານ ການບໍລິການ. ການນຳໃຊ້ນ້ຳໃຕ້ດິນເຂົ້າໃນຄົວເຮືອນ ແມ່ນມີການນຳໃຊ້ 9,499,913.4 ແມັດກ້ອນ/ປີ ຫຼື ເທົ່າກັບ 9.5 ລ້ານແມັດກ້ອນ/ປີ ສຳລັບການນຳໃຊ້ນ້ຳໃຕ້ດິນໃນຂະແໜງສາທາລະນະສຸກ ແມ່ນມີ ການນຳໃຊ້ 11,773.44 ແມັດກ້ອນ/ປີ ຫຼື ເທົ່າກັບ 0.0118 ລ້ານແມັດກ້ອນ/ປີ ແລະ ການນຳໃຊ້ນ້ຳໃຕ້ດິນ ເຂົ້າໃນຂະແໜງການບໍລິການ ແມ່ນ 38,082.64 ແມັດກ້ອນ/ປີ ຫຼື ເທົ່າກັບ 0.0381 ລ້ານແມັດກ້ອນ/ປີ. ລວມການນຳໃຊ້ນ້ຳໃຕ້ດິນ ເຂົ້າໃນ ການ ອຸປະໂພກ ແລະ ບໍລິໂພກ ແມ່ນ 9.55 ລ້ານແມັດກ້ອນ/ປີ.

ຕາຕະລາງ 7: ສັງລວມການນຳໃຊ້ນ້ຳໃຕ້ດິນ ເພື່ອອຸປະໂພກ ແລະ ບໍລິໂພກ

| ລ.ດ | ວຽກງານ | ຫົວໜ່ວຍ | ຈຳນວນ | ເປີເຊັນການນຳໃຊ້ນ້ຳໃຕ້ດິນ | ປະລິມານການນຳໃຊ້ໃຕ້ດິນ (ລິດ/ມື້) | ປະລິມານນ້ຳໃຕ້ດິນທີ່ໃຊ້(ລ້ານແມັດກ້ອນ/ປີ) |
|---|---|---|---|---|---|---|
| ຄົວເຮືອນ | | | | | | |
| 1 | ປະຊາກອນປີ 2021 | ຄົນ | 454,386 | 40% | 150 | 9.5 |
| **ລວມ** | | | | | | 9.5 |
| ຂະແໜງສາທາລະນະສຸກ | | | | | | |
| 1 | ໂຮງໝໍແຂວງ 1 ແຫ່ງ | ຕຽງ | 100 | 40% | 80 | 0.000117 |
| 2 | ໂຮງໝໍທະຫານ 1 ແຫ່ງ | ຕຽງ | 40 | 40% | 80 | 0.00047 |
| 3 | ໂຮງໝໍເມືອງ (7ແຫ່ງ) | ຕຽງ | 300 | 40% | 80 | 0.00350 |
| 4 | ສຸກສາລາ (71ແຫ່ງ) | ຕຽງ | 586 | 40% | 80 | 0.00663 |
| **ລວມ** | | | | | | 0.01 |
| ຂະແໜງການບໍລິການ | | | | | | |
| 1 | ໂຮງແຮມ (10 ແຫ່ງ) | ຕຽງ | 331 | 40% | 80 | 0.00387 |
| 2 | ເຮືອນພັກ (41 ແຫ່ງ) | ຕຽງ | 673 | 40% | 80 | 0.00786 |
| 3 | ລີສອດ ( 1 ແຫ່ງ) | ຕຽງ | 10 | 40% | 80 | 0.00012 |
| 4 | ໂຮງສະເຕ (2 ແຫ່ງ) | ຕຽງ | 9 | 40% | 80 | 0.00011 |
| 5 | ຮ້ານອາຫານ (78 ແຫ່ງ) | ແຫ່ງ | 78 | 40% | 1,000 | 0.01139 |
| 6 | ຮ້ານບັນເທີງ(31 ແຫ່ງ) | ແຫ່ງ | 31 | 40% | 1,000 | 0.00453 |
| 7 | ຮ້ານກິນດື່ມ(70) | ແຫ່ງ | 70 | 40% | 1,000 | 0.01022 |
| **ລວມ** | | | | | | **0.04** |
| **ລວມທັງໝົດ** | | | | | | **9.55** |

### 3.2. ກະສິກຳ.

ການນຳໃຊ້ນ້ຳໃຕ້ດິນເຂົ້າໃນຂະແໜງກະສິກຳ ແມ່ນ ໄດ້ແບ່ງເປັນ ປະເພດການນຳໃຊ້ນ້ຳ ສຳລັບ ປູກພືດ ແລະ ລ້ຽງສັດ. ໃນນີ້ ເນື້ອທີ່ການປູກຝັງ(ພືດ) ແມ່ນ ມີທັງໝົດ 39 ຮຕ ເຊິ່ງມີ ປະລິມານການນຳໃຊ້ນ້ຳ 6,000 ແມັດກ້ອນຕໍ່ 1 ຮຕ ລວມທັງໝົດຢູ່ 234,000 ແມັດກ້ອນ/ເນື້ອທີ່ທັງໝົດ/ລະດູການ ຫຼື ເທົ່າກັບ 0.234 ລ້ານແມັດກ້ອນ/ເນື້ອທີ່ທັງໝົດຕໍ່ລະດູການ, ສ່ວນການນຳໃຊ້ນ້ຳ ເຂົ້າໃນວຽກງານການລ້ຽງສັດ ແມ່ນ 225,124.7 ແມັດກ້ອນ/ປີ ຫຼື ປະມານ 0.225 ລ້ານແມັດກ້ອນຕໍ່ປີ. ລວມການນຳໃຊ້ນ້ຳໃຕ້ດິນ ເຂົ້າໃນ ການກະສິກຳ ແມ່ນ 0.459 ລ້ານແມັດກ້ອນ/ປີ ລາຍລະອຽດແມ່ນສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 8: ການນຳໃຊ້ນ້ຳໃຕ້ດິນ ໃນຂະແໜງ ກະສິກຳ ແລະ ລ້ຽງສັດ

| ລ/ດ | ວຽກງານ | ຫົວໜ່ວຍ | ຈຳນວນ | ເປີເຊັນທີ່ໃຊ້ນ້ຳໃຕ້ດິນ | ປະລິມານການນຳໃຊ້ນ້ຳໃຕ້ດິນ (ແມັດກ້ອນ/ລະດູການ/ເຮັກຕາ) | ປະລິມານການນຳໃຊ້ນ້ຳໃຕ້ດິນ (ແມັດກ້ອນ/ເນື້ອທີ່ທັງໝົດ/ລະດູການ) | ປະລິມານນ້ຳໃຕ້ດິນທີ່ໃຊ້ (ລ້ານແມັດກ້ອນ/ເນື້ອທີ່ທັງໝົດ/ລະດູການ) |
|---|---|---|---|---|---|---|---|
| ວຽກງານ ກະສິກຳ ແລະ ປ່າໄມ້ | | | | | | | |
| 1 | ເນື້ອທີ່ປູກພືດ | ຮຕ | 39 | 100% | 6,000 | 234,000 | 0.23 |
| **ລ/ດ** | **ວຽກງານ** | **ຫົວໜ່ວຍ** | **ຈຳນວນ** | **ເປີເຊັນທີ່ໃຊ້ນ້ຳໃຕ້ດິນ** | **ປະລິມານການນຳໃຊ້ນ້ຳໃຕ້ດິນ (ລິດ/ມື້/ໂຕ)** | **ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ (ແມັດກ້ອນ/ປີ)** | **ປະລິມານນ້ຳໃຕ້ດິນທີ່ໃຊ້ (ລ້ານແມັດກ້ອນ/ປີ)** |
| ວຽກງານລ້ຽງສັດ | | | | | | | |
| 1 | ງົວ | ໂຕ | 113,000 | 5% | 10 | 20,622.5 | 0.021 |
| 2 | ຄວາຍ | ໂຕ | 97,000 | 5% | 10 | 17,702.5 | 0.018 |
| 3 | ໝູ | ໂຕ | 723,000 | 14% | 5 | 184,726.5 | 0.185 |
| 4 | ແບ້ | ໂຕ | 37,000 | 2% | 2 | 540.2 | 0.001 |
| 5 | ສັດປີກ | ໂຕ | 2,800,000 | 3% | 0.05 | 1,533 | 0.002 |
| ລວມ | | | | | | 225,124.7 | 0.225 |
| **ລວມທັງໝົດ** | | | | | | **459,127.7** | **0.459** |

## 3.3. ອຸດສາຫະກຳ

ການນຳໃຊ້ນ້ຳໃຕ້ດິນ ສຳລັບຂະແໜງ ອຸດສາຫະກຳ ແມ່ນກວມເອົາ ບັນດາກິດຈະກຳຕ່າງໆ ເປັນຕົ້ນ ໂຮງງານອຸດສະຫະກຳເຊັ່ນ: ໂຮງງານປຸງແຕ່ງໄມ້, ໂຮງງານຜະລິດນ້ຳກ້ອນ-ນ້ຳດື່ມ, ໂຮງສີເຂົ້າ, ໂຮງງານຜະລິດຖ່ານຂາວສຳເລັດຮູບ, ໂຮງງານຜະລິດປະລາດສະຕິກ ແລະ ໂຮງງານປຸງແຕ່ງມັນຕົ້ນ, ໂຮງງານຂ້າສັດ, ໂຮງງານຜະລິດດິນຈີ່ ແລະ ໂຮງງານຜະລິດອົບແຫ້ງສາລີ, ໂຮງານຜະລິດ ແລະ ສົ່ງອອກກາເຟ ເຊິ່ງປັດຈຸບັນ ໃນທົ່ວແຂວງ ແມ່ນມີ 105 ແຫ່ງ ແລະ ໄດ້ນຳໃຊ້ນ້ຳໃຕ້ດິນ ເຂົ້າໃນການຂະບວນການຜະລິດທັງໝົດ, ເຊິ່ງໃນປັດຈຸບັນແມ່ນໄດ້ນຳໃຊ້ 826 ແມັດກ້ອນ/ມື້, ປະລິມານການນຳໃຊ້ 301,490 ແມັດກ້ອນ/ປີ ຫຼື ປະລິມານການນຳໃຊ້ 0.30149 ລ້ານແມັດກ້ອນ/ປີ ເຊິ່ງສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 9: ການນຳໃຊ້ນ້ຳໃຕ້ດິນ ໃນຂະແໜງ ອຸດສາຫະກຳ

| ລ.ດ | ວຽກງານ | ຫົວໜ່ວຍ | ຈຳນວນ | ເປີເຊັນການນຳໃຊ້ນ້ຳໃຕ້ດິນ | ປະລິມານການນຳໃຊ້ໃຕ້ດິນ (ແມັດກ້ອນ/ມື້) | ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ສຳລັບອຸດສາຫະກຳ (ແມັດກ້ອນ/ປີ) | ປະລິມານນ້ຳໃຕ້ດິນທີ່ໃຊ້ (ລ້ານແມັດກ້ອນ/ປີ) |
|---|---|---|---|---|---|---|---|
| ຂະແໜງອຸດສາຫະກຳ ແລະ ການຄ້າ | | | | | | | |
| 1 | ໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີ | ແຫ່ງ | 29 | 100% | 102 | 37,230 | 0.04 |
| 2 | ໂຮງງານຜະລິດຖ່ານຂ່າວ | ແຫ່ງ | 24 | 100% | 47 | 17,155 | 0.017155 |
| 3 | ໂຮງງານຜະລິດນ້ຳດື່ມ ແລະ ນ້ຳກ້ອນ | ແຫ່ງ | 32 | 100% | 201 | 73,365 | 0.073365 |
| 4 | ໂຮງງານຜະລິດປຣາສະຕິກ | ແຫ່ງ | 2 | 100% | 7 | 2.555 | 0.002555 |
| 5 | ໂຮງງານຂ້າສັດ | ແຫ່ງ | 8 | 100% | 8 | 2,2920 | 0.00292 |
| 6 | ໂຮງສີເຂົ້າ | ແຫ່ງ | 4 | 100% | 20 | 7,300 | 0.0073 |
| 7 | ໂຮງງານຜະລິດແປ້ງມັນຕົ້ນຟູອຽນ | ແຫ່ງ | 1 | 100% | 20 | 7,300 | 0.0073 |
| 8 | ໂຮງງານຜະລິດດິນຈີ່ | ແຫ່ງ | 2 | 100% | 77 | 21,555 | 0.002555 |
| 9 | ໂຮງງານກາດເກົ້າ-ລາວຮັບຊື້ ແລະ ຜະລິດກາເຟ | ແຫ່ງ | 1 | 100% | 5 | 1,825 | 0.001825 |
| 10 | ໂຮງງານຜະລິດ ແລະ ອົບແຫ້ງສາລີ | ແຫ່ງ | 1 | 100% | 5 | 1:825 | 0.001825 |
| 11 | ໂຮງງານຜະລິດຊີມັງ | ແຫ່ງ | 1 | 100% | 404 | 147,460 | 0.14746 |
| **ລວມທັງໝົດ** | | | | | **826** | **301,490** | **0.30149** |

ລວມທັງໝົດການນຳໃຊ້ນ້ຳໃຕ້ດິນໃນປະຈຸບັນ ປີ 2021 (ອຸປະໂພກ-ບໍລິໂພກ, ກະສິກຳ ແລະ ລ້ຽງສັດ, ອຸດສາຫະກຳ ແລະ ການຄ້າ) ແມ່ນເທົ່າກັບ 10.3105 ລ້ານແມັດກ້ອນຕໍ່ປີ.

# IV. ການປະເມີນນໍ້າໃຕ້ດິນ

## 4.1. ການປະເມີນນໍ້າໃຕ້ດິນ

ການປະເມີນນໍ້າໃຕ້ດິນ ໃນເຂດການສຶກສາແມ່ນອີງໃສ່ປະລິມານນໍ້າຝົນ. ເນື່ອງຈາກນໍ້າຝົນເປັນປັດໄຈໜຶ່ງທີ່ ໄຫຼລົງໄປສູ່ ໃຕ້ດິນ. ດັ່ງນັ້ນ, ເມື່ອນໍ້າຊຶມລົງໄປໃຕ້ດິນ ຈະເຮັດໃຫ້ອັດຕາການຕື່ມນໍ້າໃຕ້ດິນເພີ່ມຂຶ້ນ. ເພື່ອຮູ້ເຖິງອັດຕາການຕື່ມ ນໍ້າໃຕ້ດິນ, ແນວຄວາມຄິດຂອງວົງຈອນນໍ້າ ແມ່ນສາມາດນໍາໃຊ້ໄດ້. ການຕື່ມນໍ້າໃຕ້ດິນ ສາມາດຄິດໄລ່ໄດ້ຄື **ຄ່າສະເລ່ຍການຕື່ມນໍ້າໃຕ້ດິນ:** ໃນແຂວງ ສາລະວັນ ແມ່ນສະເລ່ຍຢູ່ 534.67ມມ/ປີ.

ປະລິມານນໍ້າໃຕ້ດິນ ສາມາດປະເມີນໄດ້ຄື: (1) ການຕື່ມນໍ້າໃຕ້ດິນສະເລ່ຍ ແມ່ນ 534.67/ປີ. (2) ພື້ນທີ່ສຶກສາກວມເອົາ 1,069,100 ເຮັກຕາ. ເຊິ່ງການວິເຄາະ ແມ່ນ ຈະວິເຄາະ ຖ້າຫາກວ່າດິນຟ້າອາກາດ ແລະ ການນໍາໃຊ້ທີ່ດິນ ມີການປ່ຽນແປງ ເຊິ່ງສາມາດເຮັດໃຫ້ ປະລິມານ ນໍ້າໃຕ້ດິນຫຼຸດລົງປີລະ 1%. ດັ່ງນັ້ນຜົນການ ວິເຄາະການສະໜອງນໍ້າທັງໝົດ ແມ່ນໄດ້ສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 10: ປະລິມານນໍ້າໃຕ້ດິນ ໃນຊັ້ນນໍ້າໃຕ້ດິນ

| ປີ | ການຊຶມນໍ້າໃຕ້ດິນ R (ມິນລິແມັດ/ປີ) | ການຊຶມນໍ້າ ໃຕ້ດິນ R (ແມັດ/ປີ) | ເນື້ອທີ່ຂອງ ແຂວງ ສາລະວັນ (ກິໂລຕາແມັດ) | ປະລິມານ ນໍ້າໃຕ້ດິນ (ລ້ານແມັດກ້ອນ/ປີ) |
|---|---|---|---|---|
| 2020 | 534.67 | 0.53 | 10,691 | 5,716.16 |
| 2021 | 529.32 | 0.53 | 10,691 | 5,659.00 |
| 2022 | 524.03 | 0.52 | 10,691 | 5,602.41 |
| 2023 | 518.79 | 0.52 | 10,691 | 5,546.38 |
| 2024 | 513.60 | 0.51 | 10,691 | 5,490.92 |
| 2025 | 508.47 | 0.51 | 10,691 | 5,436.01 |
| 2026 | 503.38 | 0.50 | 10,691 | 5,381.65 |
| 2027 | 498.35 | 0.50 | 10,691 | 5,327.83 |
| 2028 | 493.36 | 0.49 | 10,691 | 5,274.55 |
| 2029 | 488.43 | 0.49 | 10,691 | 5,221.81 |
| 2030 | 483.55 | 0.48 | 10,691 | 5,169.59 |

ແຫຼ່ງຂໍ້ມູນ: ບົດສຶກສາກ່ຽວກັບ "ການປະເມີນການຕື່ມນໍ້າໃຕ້ດິນລະດັບພາກພື້ນໃນອ່າງແມ່ນໍ້າຂອງຕອນລຸ່ມ".
Lacombe, G.; Douangsavanh, S.; Vongphachanh, S.;Pavelic, P. 2017)

ແຜນທີ່ ປະລິມານການຕື່ມນ້ຳໃຕ້ດິນ (Recharge) ແຂວງ ສາລະວັນ




(ແຫຼ່ງຂໍ້ມູນ: ບົດສຶກສາກ່ຽວກັບ "ການປະເມີນການຕື່ມນ້ຳໃຕ້ດິນລະດັບພາກພື້ນໃນອ່າງແມ່ນ້ຳຂອງຕອນລຸ່ມ".
Lacombe, G.; Douangsavanh, S.; Vongphachanh, S.;Pavelic, P. 2017)

ຮູບທີ 13: ແຜນທີ່ ປະລິມານການຕື່ມນ້ຳໃຕ້ດິນ (Recharge) ຢູ່ ແຂວງ ສາລະວັນ

ຄ່າສະເລ່ຍດັ່ງກ່າວທີ່ນຳມາຄິດໄລ່ ໃນການປະເມີນປະລິມານການຕື່ມນ້ຳໃຕ້ດິນ ແມ່ນຈາກບົດສຶກສາກ່ຽວກັບ "ການປະເມີນການຕື່ມນ້ຳໃຕ້ດິນລະດັບພາກພື້ນໃນອ່າງແມ່ນ້ຳຂອງຕອນລຸ່ມ" ປີ 2017 ເຊິ່ງອາດຈະມີຄ່າຜິດດ່ຽງສູງ. ສະນັ້ນ ຈຶ່ງຄວນ ມີການສຶກສາ ແລະ ສຳຫຼວດ ລະອຽດຄືນໃນເຂດນີ້ ເພື່ອເປັນຂໍ້ມູນພື້ນຖານໃນການອອກອະນຸຍາດການນຳໃຊ້ນ້ຳໃຕ້ດິນໃນອະນາຄົດ.

## 4.2. ການປະເມີນການນຳໃຊ້ນ້ຳໃຕ້ດິນໃນອານາຄົດ

ການປະເມີນຄວາມຕ້ອງການນ້ຳໃຕ້ດິນໃນອານາຄົດ ແມ່ນອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ (ປີ 2021-2025) ແລະ ແຜນພັດທະນາຂອງຂະແໜງການທີ່ກ່ຽວຂ້ອງຮອດປີ 2030 ເຊິ່ງເຫັນວ່າແຂວງສາລະວັນ ແມ່ນແຂວງໜຶ່ງທີ່ມີການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມລວມເຖິງ ການຂະຫຍາຍຕົວຂອງປະຊາກອນ ຊຶ່ງປະຊາກອນໃນແຂວງທັງໝົດ 454,386 ຄົນ (ປີ 2021)ໂດຍມີການຂະຫຍາຍຕົວທາງດ້ານປະຊາກອນ 2 ເປີເຊັນຕໍ່ປີ ດັ່ງນັ້ນ, ການປະເມີນຄວາມຕ້ອງການນ້ຳໃຕ້ດິນໃນອານາຄົດ ແມ່ນອີງໃສ່ອັດຕາການເພີ້ມຂຶ້ນຂອງປະຊາກອນໃນແຂວງລະອຽດດັ່ງລຸ່ມນີ້:

### 4.2.1. ອຸປະໂພກ ແລະ ບໍລິໂພກ.

ການປະເມີນຄວາມຕ້ອງການການນຳໃຊ້ນ້ຳໃຕ້ດິນ ສຳລັບອຸປະໂພກ ແລະ ບໍລິໂພກໃນອະນາຄົດ ໄດ້ແບ່ງອອກເປັນ 3 ປະເພດຄື ການນຳໃຊ້ໃນຄົວເຮືອນ, ການນຳໃຊ້ສຳລັບຂະແໜງການສາທາລະນະສຸກ ແລະ ແໜງການການບໍລິການ ຊຶ່ງການປະເມີນຄວາມຕ້ອງການນ້ຳໃຕ້ດິນ ແມ່ນຈະອີງໃສ່ອັດຕາການເພີ່ມຂຶ້ນຂອງປະຊາກອນ ຕົວຢ່າງ ໃນປີ 2021 ແຂວງ ສາລະວັນ ມີປະຊາກອນ ທັງໝົດ 454,386 ຄົນ ແລະ ໃນປີ 2022 ມີປະຊາກອນທັງໝົດ 463,474 ຄົນ. ໃນນີ້ອັດຕາສ່ວນເພີ່ມຂຶ້ນຂອງປະຊາກອນແມ່ນ 2% ຕໍ່ປີ. ຕົວເລກອັດຕາການເພີ່ມຂຶ້ນດັ່ງກ່າວສະແດງເຖິງ ການເພີ່ມຂຶ້ນຂອງຄວາມຕ້ອງການການນຳໃຊ້ນ້ຳໃຕ້ດິນ. ເຊິ່ງການ ປະເມີນອັດຕາການເພີ່ມຂຶ້ນຂອງປະຊາກອນ ແມ່ນມີດັ່ງນີ້: ໃນປີ 2021 ແມ່ນຈຳນວນ ປະຊາກອນຈະມີ 454,386 ຄົນ ແລະ ປີ 2025 ມີປະຊາກອນຈຳນວນ 491,842 ຄົນ ແລະ ໃນປີ 2026 ຈຳນວນປະຊາກອນຈະມີ 501,679 ຄົນ ຮອດປີ 2030 ມີຈຳນວນປະຊາກອນ 543,033 ຄົນ.

ການປະເມີນຄວາມຕ້ອງການການນຳໃຊ້ນ້ຳໃຕ້ດິນ ໃນຄົວເຮືອນ ສຳລັບໄລຍະປີ 2021 ຫາ 2025 ແມ່ນຈະອີງໃສ່ອັດຕາ ການເພີ່ມຂຶ້ນ ຂອງປະຊາກອນທີ່ໄດ້ປະເມີນໃນຂ້າງເທິງ ແລະ ສາມາດຄາດຄະເນໄດ້ວ່າ ຄວາມຕ້ອງການນ້ຳ ສະເລ່ຍແມ່ນ 10.36 ລ້ານແມັດກ້ອນ/ປີ ແລະ ເພື່ອປະເມີນການນຳໃຊ້ນ້ຳໃນອະນາຄົດ ໃນອີກ 5 ປີຂ້າງໜ້າ ຫຼື ຊ່ວງໄລຍະປີ 2026 ຫາ 2030, ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການສຳລັບ ຄົວເຮືອນ ສະເລ່ຍແມ່ນ 11.44 ລ້ານແມັດກ້ອນ/ປີ ເຊິ່ງສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 11: ການປະເມີນ ຄວາມຕ້ອງນຳໃຊ້ນ້ຳໃຕ້ດິນໃນຄົວເຮືອນ (2021-2030)

| ປີ | ປະຊາກອນ | ປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ສຳລັບຄົວເຮືອນ (ແມັດກອ້ນ/ມື້) | ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ສຳລັບຄົວເຮືອນ ( ລ້ານແມັດກ້ອນ/ປີ) |
|---|---|---|---|
| ຊ່ວງ 2021-2025 | | | |
| 2021 | 454,386 | 27,263.16 | 9.95 |
| 2022 | 463,474 | 27,808.42 | 10.15 |
| 2023 | 472,743 | 28,364.59 | 10.35 |
| 2024 | 482,198 | 28,931.88 | 10.56 |
| 2025 | 491,842 | 29,510.52 | 10.77 |
| ລວມປີ 2021-2025 | | | 51.79 |
| ສະເລ່ຍ | | | 10.36 |
| ຊ່ວງ 2026-2030 | | | |
| 2026 | 501,679 | 30,100.73 | 10.99 |
| 2027 | 511,712 | 30,702.75 | 11.21 |
| 2028 | 521,947 | 31,316.80 | 11.43 |
| 2029 | 532,386 | 31,943.14 | 11.66 |
| 2030 | 543,033 | 32,582 | 11.89 |
| ລວມປີ 2026-2030 | | | 57.18 |
| ສະເລ່ຍ | | | 11.44 |

ການປະເມີນຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນ ສຳລັບຂະແໜງສາທາລະນະສຸກ ແມ່ນ 12,941.44 ແມັດກ້ອນ/ປີ ຫຼື 0.0129 ລ້ານແມັດກ້ອນ/ປີ ແລະ ຂະແໜງການບໍລິການແມ່ນມີຄວາມຕ້ອງການໃນການນຳໃຊ້ນ້ຳໃຕ້ດິນ ແມ່ນ 38,082.64 ແມັດກ້ອນ/ປີ ຫຼື 0.03808264 ລ້ານແມັດກ້ອນ/ປີ, ເຊິ່ງສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 12: ການປະເມີນຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນຂະແໜງສາທາລະນະສຸກ ແລະ ການບໍລິການ

| ລ.ດ | ວຽກງານ | ຫົວໜ່ວຍ | ຈຳນວນ | ເພີ່ມຂຶ້ນ (%) | ຈຳນວນເພີ່ມຂຶ້ນ | ເປີເຊັນການນຳໃຊ້ນ້ຳໃຕ້ດິນ | ປະລິມານການນຳໃຊ້ໃຕ້ດິນ (ລິດ/ມື້/ຄົນ) | ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ (ແມັດກ້ອນ/ປີ) | ປະລິມານນ້ຳໃຕ້ດິນທີ່ໃຊ້ (ລ້ານແມັດກ້ອນ/ປີ) |
|---|---|---|---|---|---|---|---|---|---|
| ຂະແໜງສາທາລະນະສຸກ | | | | | | | | | |
| 1 | ໂຮງໝໍແຂວງ 1 ແຫ່ງ | ຕຽງ | 100 | 100 | 200 | 40% | 80 | 2,336 | 0.0023 |
| 2 | ໂຮງໝໍທະຫານ 1 ແຫ່ງ | ຕຽງ | 40 | | 0 | 40% | 80 | 467.2 | 0.0005 |
| 3 | ໂຮງໝໍເມືອງ (7ແຫ່ງ) | ຕຽງ | 300 | | 300 | 40% | 80 | 3,504 | 0.0035 |
| 4 | ສຸກສາລາ (71ແຫ່ງ) | ຕຽງ | 568 | | 568 | 40% | 80 | 6,634.24 | 0.0066 |
| **ລວມ** | | | | | | | | 12,941.44 | 0.0129 |
| ຂະແໜງການບໍລິການ | | | | | | | | | |
| 1 | ໂຮງແຮມ (10 ແຫ່ງ) | ຕຽງ | 331 | | 331 | 40% | 80 | 3,866.08 | 0.0039 |
| 2 | ເຮືອນພັກ (41 ແຫ່ງ) | ຕຽງ | 673 | | 673 | 40% | 80 | 7,860.64 | 0.0079 |
| 3 | ລີສອດ ( 1 ແຫ່ງ) | ຕຽງ | 10 | | 10 | 40% | 80 | 116.80 | 0.0001 |
| 4 | ໂຮງສະເຕ (2 ແຫ່ງ) | ຕຽງ | 9 | | 9 | 40% | 80 | 105.12 | 0.0001 |
| 5 | ຮ້ານອາຫານ | ແຫ່ງ | 78 | | 78 | 40% | 1,000 | 11,388 | 0.011388 |
| 6 | ຮ້ານບັນເທີງ | ແຫ່ງ | 31 | | 31 | 40% | 1,000 | 4,526 | 0.004526 |
| 7 | ຮ້ານກິນດື່ມ | ແຫ່ງ | 70 | | 70 | 40% | 1,000 | 10,220 | 0.01022 |
| **ລວມ** | | | | | | | | 38,082.64 | 0.0380826 |
| **ລວມທັງໝົດ** | | | | | | | | **51,024.08** | **0.051** |

### 4.2.2. ກະສິກຳ.

ຂະແໜງກະສິກຳ ແລະ ປ່າໄມ້ ອີງໃສ່ແຜນການ 5 ປີ 2021-2025 ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂອງຂະແໜງການຂອງຂະແໜງການປີ 2021-2030 ຄາດວ່າ ຈະມີ ເນື້ອທີ່ປູກພືດເພີ່ມຂຶ້ນເປັນ 165.5 ຈາກເນື້ອທີ່ເດີມ ມີ 39 ຮຕ, ຊຶ່ງຈະມີການນຳໃຊ້ນ້ຳໃຕ້ດິນປະມານ 0.993 ລ້ານແມັດກ້ອນ/ປີ; ສ່ວນການນຳໃຊ້ນ້ຳ ເຂົ້າໃນວຽກງານການລ້ຽງສັດ ແມ່ນ 235,835.99 ແມັດກ້ອນ/ປີ ຫຼື ປະມານ 0.24 ລ້ານແມັດກ້ອນ/ປີ. ລວມການນຳໃຊ້ນ້ຳໃຕ້ດິນ ເຂົ້າໃນການກະສິກຳ ແມ່ນ 1.23 ລ້ານແມັດກ້ອນ/ປີ, ເຊິ່ງສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້

ຕາຕະລາງ 13: ການປະເມີນ ຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນຂະແໜງກະສິກຳ (2021-2025)

| ລ.ດ | ວຽກ ງານ | ຫົວ ໜ່ວຍ | ຈຳນວນ | ເພີ່ມ ຂຶ້ນ (%) | ຈຳນວນ ເພີ່ມຂຶ້ນ | ເປີເຊັນ ການນຳ ໃຊ້ນ້ຳ ໃຕ້ດິນ | ປະລິມານ ການນຳ ໃຊ້ໃຕ້ດິນ (ແມັດ/ ຮຕ) | ການປະເມີນ ປະລິມານນ້ຳ ໃຕ້ດິນທີ່ ຕ້ອງການໃຊ້ (ແມັດກ້ອນເນື້ ທີ່ທັງໝົດ/ປີ) | ປະລິມານນ້ຳ ໃຕ້ດິນທີ່ໃຊ້ (ລ້ານແມັດ ກ້ອນ/ເນື້ທີ່ ທັງໝົດ/ປີ) |
|---|---|---|---|---|---|---|---|---|---|
| ວຽກງານກະສິກຳ ແລະ ປ່າໄມ້ | | | | | | | | | |
| 1 | ເນື້ອທີ່ ປູກພືດ | ຮຕ | 39 | | 165.5 | 100% | 6,000 | 993,000 | 0.993 |
| **ລ.ດ** | **ວຽກ ງານ** | **ຫົວ ໜ່ວຍ** | **ຈຳນວນ** | **ເພີ່ມ ຂຶ້ນ (%)** | **ຈຳນວນ ເພີ່ມຂຶ້ນ** | **ເປີເຊັນ ການນຳ ໃຊ້ນ້ຳ ໃຕ້ດິນ** | **ປະລິມານ ການນຳ ໃຊ້ນ້ຳໃຕ້ ດິນ (ລິດ/ ມື້/ໂຕ)** | **ການປະເມີນ ປະລິມານນ້ຳ ໃຕ້ດິນທີ່ ຕ້ອງການໃຊ້ (ແມັດກ້ອນ/ປີ)** | **ປະລິມານນ້ຳ ໃຕ້ດິນທີ່ໃຊ້ (ລ້ານແມັດ ກ້ອນ/ປີ)** |
| ວຽກງານການ ລ້ຽງສັດ | | | | | | | | | |
| 1 | ງົວ | ໂຕ | 113,000 | 4% | 117,520 | 5% | 10 | 21,447.4 | 0.0214 |
| 2 | ຄວາຍ | ໂຕ | 97,000 | 3% | 99,910 | 5% | 10 | 18,233.58 | 0.0182 |
| 3 | ໝູ | ໂຕ | 723,000 | 5% | 759,150 | 14% | 5 | 193,962.83 | 0.0194 |
| 4 | ແບ້ | ໂຕ | 37,000 | 5% | 38,850 | 2% | 2 | 567.21 | 0.0006 |
| 5 | ສັດປີກ | ໂຕ | 2,800,000 | 6% | 2,968,000 | 3% | 0.05 | 1,642.98 | 0.0016 |
| **ລວມ** | | | | | | | | 235,835.99 | 0.24 |
| **ລວມທັງໝົດ** | | | | | | | | **1,228,835.99** | **1.23** |

### 4.2.3. ອຸດສາຫະກຳ

ຂະແໜງການ ອຸດສາຫະກຳ ແມ່ນອີງໃສ່ແຜນການພັດທະນາປີ 2021-2030 ຂອງຂະແໜງການດັ່ງກ່າວ ແມ່ນເຫັນວ່າ ມີຈຳນວນປະລິມານການນຳໃຊ້ນ້ຳໃຕ້ດິນນ້ອຍກ່ວາໝູ່ເມື່ອບທຽບກັບຂະແໜງການອື່ນ, ແຕ່ອີງຕາມການສັງລວມຈຳນວນ ບັນດາໂຮງງານຕ່າງໆ ແລະ ຄາດຄະເນການເພີ່ມຂຶ້ນຂອງປະລິມານການນຳໃຊ້ນ້ຳໃຕ້ດິນແມ່ນຢູ່ໃນລະຫ່ວາງ 2-5% ໃນອະນາຄົດ ຄາດຄະເນຄວາມຕ້ອງການນ້ຳໃຕ້ດິນໃນອະນາຄົດ ແມ່ນ 0.311544ລ້ານແມັດກ້ອນ/ປີ, ເຊິ່ງສະແດງໃຫ້ເຫັນໃນຕາຕະລາງດັ່ງລຸ່ມນີ້:

ຕາຕະລາງ 14: ການປະເມີນຄວາມຕ້ອງການນ້ຳໃຕ້ດິນໃນຂະແໜງອຸດສາຫະກຳ

| ລ.ດ | ວຽກງານ | ຫົວໜ່ວຍ | ຈຳນວນ | ຈຳນວນການນຳໃຊ້ນ້ຳໃຕ້ດິນ (%) | ປະລິມານການນຳໃຊ້ນ້ຳໃຕ້ດິນ (ແມັດກ້ອນ/ມື້) | ຈຳນວນເພີ້ມຂຶ້ນການນຳໃຊ້ນ້ຳໃຕ້ດິນໂດຍສະເລ່ຍ (%) | ປະລິມານການນຳໃຊ້ໃຕ້ດິນ (ແມັດກ້ອນ/ມື້) ຕາມເປີເຊັ່ນການເພີ້ມຂຶ້ນ | ການປະເມີນປະລິມານນ້ຳໃຕ້ດິນທີ່ຕ້ອງການໃຊ້ສຳລັບອຸດສາຫະກຳ (ແມັດກ້ອນ/ປີ) | ປະລິມານນ້ຳໃຕ້ດິນທີ່ໃຊ້(ລ້ານແມັດກ້ອນ/ປີ) |
|---|---|---|---|---|---|---|---|---|---|
| **ຂະແໜງອຸດສາຫະກຳ** | | | | | | | | | |
| 1 | ໂຮງງານປຸງແຕ່ງໄມ້ ແລະ ເຟີນິເຈີ | ແຫ່ງ | 29 | 100% | 102 | 2% | 104.04 | 37,973 | 0.038 |
| 2 | ໂຮງງານຜະລິດຖ່ານຂ່າວ | ແຫ່ງ | 24 | 100% | 47 | 2% | 47.94 | 17,498 | 0.017498 |
| 3 | ໂຮງງານຜະລິດນ້ຳດື່ມ ແລະ ນ້ຳກ້ອນ | ແຫ່ງ | 32 | 100% | 201 | 5% | 211.05 | 77,033 | 0.077033 |
| 4 | ໂຮງງານຜະລິດປຣາສະຕິກ | ແຫ່ງ | 2 | 100% | 7 | 2.5% | 7.175 | 2,619 | 0.002619 |
| 5 | ໂຮງງານຂ້າສັດ | ແຫ່ງ | 8 | 100% | 8 | 3% | 8.24 | 3,008 | 0.003008 |
| 6 | ໂຮງສີເຂົ້າ | ແຫ່ງ | 4 | 100% | 20 | 2% | 20.4 | 7,446 | 0.007446 |
| 7 | ໂຮງງານຜະລິດແປ້ງມັນຕົ້ນຟູອຽນ | ແຫ່ງ | 1 | 100% | 20 | 5% | 21 | 7,665 | 0.007665 |
| 8 | ໂຮງງານຜະລິດດິນຈີ່ | ແຫ່ງ | 2 | 100% | 7 | 4% | 7.28 | 2,657 | 0.00267 |
| 9 | ໂຮງງານກາດເກົ້າ-ລາວ ຮັບຊື້ ແລະ ຜະລິດກາເຟ | ແຫ່ງ | 1 | 100% | 5 | 4% | 5.2 | 1,898 | 0.001898 |
| 10 | ໂຮງງານຜະລິດ ແລະ ອົບແຫ້ງສາລີ | ແຫ່ງ | 1 | 100% | 5 | 2% | 5.1 | 1,862 | 0.001862 |
| 11 | ໂຮງງານຜະລິດຊີມັງ | ແຫ່ງ | 1 | 100% | 404 | 3% | 416.12 | 151,884 | 0.151884 |
| **ລວມທັງໝົດ** | | | | | | | | **311,544** | **0.311544** |

## 4.3. ຄວາມດຸນດ່ຽງຂອງນ້ຳໃຕ້ດິນ

ການປະເມີນຄວາມດຸ່ນດ່ຽງຂອງນ້ຳໃຕ້ດິນ ແມ່ນນຳໃຊ້ຂໍ້ມູນທາງດ້ານ ປະລິມານນ້ຳໃຕ້ດິນ ຈາກບົດສຶກສາຂອງ Guillaume Lacombe, 2017, ຂໍ້ມູນການນຳໃຊ້ນ້ຳໃຕ້ດິນ ແລະ ສະພາບການປ່ຽນຂອງດິນຟ້າອາກາດ. ເຊິ່ງການປະເມີນ ເຫັນວ່າ ປະລິມານນ້ຳໃຕ້ດິນ ແມ່ນມີການຫຼຸດລົງປີລະ 1%. ດັ່ງນັ້ນຜົນການປະເມີນປະລິມານ ນ້ຳໃຕ້ດິນໃນອະນາຄົດ ແມ່ນມີ 5,659 ລ້ານແມັດກ້ອນໃນປີ 2021 ແລະ ຫຼຸດລົງຮອດ 5,169.59 ລ້ານແມັດກ້ອນໃນປີ 2030 ສະນັ້ນການ ປະເມີນຄວາມດຸ່ນດ່ຽງຂອງນ້ຳໃຕ້ດິນ ມີດັ່ງນີ້:

- ສຳລັບປີ 2020-2025 ເຫັນວ່າຄວາມຕ້ອງການນ້ຳ ສາມາດຄາດຄະເນ ຫຼື ປະເມີນ ສຳລັບການນຳໃຊ້ ພາຍໃນແຂວງ, ລວມທັງຄົວເຮືອນ. ຄວາມຕ້ອງການນ້ຳໃຕ້ດິນທັງໝົດ ໃນປີ 2025 ແມ່ນ 12.36 ລ້ານແມັດ

ກ້ອນ. ແລະ ຜົນການດຸ່ນດ່ຽງນ້ຳໃຕ້ດິນ ໃນປີ 2025 ແມ່ນ 5,423.64 ລ້ານແມັດກ້ອນ. ເຊິ່ງສະແດງໃຫ້ເຫັນວ່າ ປະລິມານ ນ້ຳໃຕ້ດິນໃນເຂດແຂວງແມ່ນການດຸ່ນດ່ຽງ ຫຼື ພຽງພໍຕໍ່ຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນແຕ່ລະປີ.

- ສຳລັບປີ 2026-2030 ຄວາມຕ້ອງການນ້ຳໃຕ້ດິນສາມາດຄາດຄະເນ ຫຼື ປະເມີນ ສຳລັບການນຳໃຊ້ພາຍໃນແຂວງ, ລວມທັງຕາມຄົວເຮືອນ. ຄວາມຕ້ອງການນ້ຳໃຕ້ດິນທັງໝົດ ໃນປີ 2030 ແມ່ນ 13.49 ລ້ານແມັດກ້ອນ ແລະ ຜົນການດຸ່ນດ່ຽງນ້ຳໃຕ້ດິນ ໃນປີ 2030 ແມ່ນ 5,156.10 ລ້ານແມັດກ້ອນ. ເຊິ່ງສະແດງໃຫ້ເຫັນວ່າ ປະລິມານ ນ້ຳໃຕ້ດິນໃນເຂດແຂວງແມ່ນການດຸ່ນດ່ຽງ ຫຼື ພຽງພໍຕໍ່ຄວາມຕ້ອງການນຳໃຊ້ນ້ຳໃຕ້ດິນໃນແຕ່ລະປີ, ເຊິ່ງສະແດງໃຫ້ເຫັນໃນເສັ້ນສະແດງດັ່ງລຸ່ມນີ້:




ຮູບທີ 14: ເສັ້ນສະແດງສະຫຼຸບຄວາມຕ້ອງການ ແລະ ຄວາມດຸ່ນຂອງນ້ຳໃຕ້ດິນ

## 4.4. ກາລະໂອກາດ ແລະ ສິ່ງທ້າທ້າຍ

### 4.4.1. ກາລະໂອກາດ

ແຂວງ ສາລະວັນ ທີ່ມີທີ່ຕັ້ງ, ພູມສັນຖານ ແລະ ລວມທັງຄວາມອຸດົມສົມບູນ ທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງແຕ່ລະເຂດລວມທັງນ້ຳໃຕ້ດິນທີ່ເປັນເງື່ອນໄຂ ທີ່ເອື້ອອຳນວຍ ໃຫ້ແກ່ການພັດທະນາເສດເສດຖະກິດ-ສັງຄົມ. ໃນປັດຈຸບັນເຖິງວ່າຈະມີການເພີ່ມຂຶ້ນຂອງ ພື້ນທີ່ກະສິກຳ, ການຂະຫຍາຍຕົວຂອງປະຊາກອນ ແລະ ການພັດທະນາອຸດສາຫະກຳ, ບໍ່ແຮ່ ທີ່ສົ່ງຜົນໃຫ້ມີການນຳໃຊ້ນ້ຳໃຕ້ດິນຫຼາຍຂຶ້ນ ແຕ່ຖ້າທຽບໃສ່ປະລິມານນ້ຳໃຕ້ດິນທີ່ມີໃນພື້ນທີ່ຂອງແຂວງ ເຫັນວ່າຍັງພຽງພໍທີ່ຈະຕອບສະໜອງຕໍ່ການພັດທະນາ ໃນແຕ່

ລະຂະແໜງການ. ອີກດ້ານໜຶ່ງ ວຽກງານ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຂວງສາລະວັນ ແມ່ນໄດ້ຮັບຄວາມເອົາໃສ່ ແລະ ຊີ້ນຳ ຈາກການ ນຳພາຍໃນແຂວງ ແລະ ກະຊວງ ລວມເຖິງຍັງມີບັນດາຕິນຳກຳ ທີ່ເປັນເຄື່ອງມືໃນ ການຄຸ້ມຄອງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

### 4.4.2. ສິ່ງທ້າທ້າຍ

1. ດ້ານນິຕິກຳ ແລະ ລະບຽບການຕ່າງໆ: ເຖິງແມ່ນວ່າຈະມີກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ກັບການຄຸ້ມຄອງນ້ຳໃຕ້ດິນ ແຕ່ ບັນດານິຕິກຳດັ່ງກ່າວ ຍັງບໍ່ໄດ້ຮັບການເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ເທົ່າທີ່ ຄວນເຫັນໄດ້ຈາກການຂໍ ແລະ ອອກອະນຸຍາດ ການນຳໃຊ້ ແລະ ການຂຸດເຈາະ ນ້ຳໃຕ້ດິນ ແມ່ນ ຍັງມີໜ້ອຍ ໂດຍທຽບໃສ່ສະພາບການນຳໃຊ້ນ້ຳໃຕ້ດິນໃນປັດຈຸບັນ;
2. ກົນໄກການປະສານງານຕ້ອງໄດ້ຮັບການປັບປຸງ: ໃນຂະນະທີ່ວຽກງານ ການຄຸ້ມຄອງນ້ຳໃຕ້ດິນ ຊຶ່ງຢູ່ໃນຂັ້ນຕອນ ລິເລີ່ມໃນການຈັດຕັ້ງປະຕິບັດ, ສະນັ້ນ ກົນໄກການປະສານງານ ທີ່ມີປະສິດທິຜົນ ແມ່ນມີຄວາມຈຳເປັນ ແລະ ຕ້ອງໄດ້ຮັບການແກ້ໄຂຢ່າງເລັ່ງດ່ວນ ເປັນຕົ້ນ ແມ່ນການປະສານງານ ແລະແລກປ່ຽນຂໍ້ມູນ ລະຫວ່າງຂັ້ນສູນກາງ, ທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
3. ແຫຼ່ງຂໍ້ມູນທີ່ຕັ້ງຂອງບໍ່ນ້ຳຍັງຂາດເຂີນ ແລະ ຕ້ອງໄດ້ມີການສຶກສາແບບຂະຫຍາຍຈາກເຂດບັນດາບ້ານແລ້ວ ຂະຫຍາຍໄປທຸກເມືອງໃນຂົງເຂດແຂວງເພື່ອເປັນຂໍ້ມູນໃນການຄຸ້ມຄອງການນຳໃຊ້ນ້ຳໃຕ້ດິນໃນອະນາຄົດ;
4. ເຂດສະຫງວນນ້ຳ ນ້ຳໃຕ້ດິນ ແລະ ຊັບພະຍາກອນນ້ຳໃຕ້ດິນ ທັງລະດັບ ຊຸມຊົນ ຫລື ຂັ້ນເມືອງ ຍັງບໍ່ທັນໄດ້ຮັບການກຳນົດ ແລະ ຂຶ້ນທະບຽນ;
5. ບັນຫາທາງດ້ານຄວາມຮູ້ຄວາມສາມາດຂອງບຸກຄະລະກອນ ກ່ຽວກັບວຽກງານຄຸ້ມຄອງນ້ຳໃຕ້ດິນ ໂດຍສະເພາະ  ຄວາມຮູ້ທາງດ້ານ ການເກັບກຳ ແລະ ການສຳຫຼວດນ້ຳໃຕ້ດິນ;
6. ສຳລັບແຂວງສາລະວັນ ແມ່ນສຶກສາຈາກຂໍ້ມູນ ມີ 2 ກ່ຽວກັບຊັ້ນຫໍລະນີ ທີ່ເຄີຍມີການສຶກສາໃນໄລຍະຜ່ານມາ ເທົ່ານັ້ນ, ເຊິ່ງຈຳເປັນຕ້ອງມີການ ຂຸດເຈາະ ບໍ່ຕິດຕາມ ເພື່ອສຳຫຼວດຊັ້ນຫໍລະນີ ໃນແຕ່ລະເມືອງເພື່ອສົມທຽບກັບຂໍ້ມູນທີ່ມີຢູ່ ພ້ອມທັງຕິດຕາມປະລິມານ ແລະ ຄຸນນະພາບ ນ້ຳໃຕ້ດິນ ເຊິ່ງເກີດຈາກສະພາບຂອງຊັ້ນຫໍລະນີ ນັ້ນໆຕື່ມ. ສະນັ້ນ, ຈຶ່ງຈຳເປັນຕ້ອງມີແຜນການ ແລະ ວິທີການຢ່າງລະອຽດເພື່ອສຶກສາ ແລະ ສຳຫຼວດນ້ຳໃຕ້ດິນ.

## V. ແຜນງານຂອງການຄຸ້ມຄອງນ້ຳໃຕ້ດິນ

**ແຜນງານ 1: ການສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມ ການມີສ່ວນຮ່ວມ ໃນການຄຸ້ມຄອງນ້ຳໃຕ້ດິນ**

**ຄາດໝາຍ 1.1 ການສ້າງຄວາມເຂັ້ມແຂງທາງດ້ານກົນໄກການຄຸ້ມຄອງ ແລະ ບຸກຄະລາກອນ ໃນການຄຸ້ມຄອງນ້ຳໃຕ້ດິນ**

ກິດຈະກຳ 1: ສົ່ງເສີມຄວາມຮູ້ຄວາມສາມາດທາງດ້ານວິຊາການໃຫ້ແກ່ ພະນັກງານ ໃນຂະແໜງ ຊັບພະຍາກອນນ້ຳ ກ່ຽວກັບ ການຄຸ້ມຄອງນ້ຳໃຕ້ດິນເປັນແຕ່ລະໄລຍະ.

ກິດຈະກຳ 2: ສ້າງກົນໄກການປະສານ ເພື່ອແລກປ່ຽນຄວາມຮູ້, ຂໍ້ມູນຂ່າວສານ ແລະ ການຖອດຖອນບົດຮຽນດ້ານການຄຸ້ມຄອງ ນ້ຳໃຕ້ດິນ ໃນຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ລະຫວ່າງຂະແໜງທີ່ກ່ຽວຂ້ອງ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ.

ກິດຈະກຳ 3: ຊອກຫາແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງນ້ຳໃຕ້ດິນ.

**ຄາດໝາຍ 1.2 ການສົ່ງເສີມການມີ ສ່ວນຮ່ວມ ແລະ ການສ້າງຈິດສຳນຶກ ໃນການຄຸ້ມຄອງນ້ຳໃຕ້ດິນ**

ກິດຈະກຳ 1: ສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະ ຍົກສູງບົດບາດຍິງ-ຊາຍ ໃນການຄຸ້ມຄອງນ້ຳໃຕ້ດິນ.

ກິດຈະກຳ 2: ເຜີຍແຜ່ບັນດາກົດໝາຍ, ນິຕິກຳຕ່າງໆ ໃຫ້ແກ່ຜູ້ພັດທະນາໂຄງການ ແລະ ປູກຈິດສຳນຶກ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນໃນການຄຸ້ມຄອງນ້ຳໃຕ້ດິນ.

ກິດຈະກຳ 3: ການປະເມີນການຈັດຕັ້ງປະຕິບັດ ແລະ ການມີສ່ວນຮ່ວມໃນການຄຸ້ມຄອງນ້ຳໃຕ້ດິນ.

**ແຜນງານ 2: ການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ-ຂ່າວສານ ນ້ຳໃຕ້ດິນ**

**ຄາດໝາຍ 2.1: ການສຳຫຼວດ ແລະ ເກັບກຳຂໍ້ມູນ-ຂ່າວສານ ກ່ຽວກັບນ້ຳໃຕ້ດິນ**

ກິດຈະກຳ 1: ສຶກສາ, ສຳຫຼວດ ແລະ ເກັບກຳຂໍ້ມູນ ແຫຼ່ງນ້ຳໃຕ້ດິນ, ປະລິມານ ແລະ ຄຸນນະພາບນ້ຳໃຕ້ດິນ ແລະ ສຶກສາທິດທາງການໄຫຼ ຂອງນ້ຳໃຕ້ດິນ ພ້ອມທັງຂຶ້ນບັນຊີແຫຼ່ງນ້ຳໃຕ້ດິນ, ບໍ່ນ້ຳໃຕ້ດິນ, ເຂດທີ່ມີຄວາມສ່ຽງຕໍ່ປະລິ ມານ ແລະ ຄຸນນະພາບນ້ຳໃຕ້ດິນ ລວມເຖິງເຂດທີ່ມີຄວາມສ່ຽງໃນການຂາດແຄນນ້ຳ.

ກິດຈະກຳ 2: ເກັບກຳ ແລະ ສັງລວມບັນດາ ຂໍ້ມູນມືສອງ ເຊັ່ນ: ບົດລາຍງານ, ບົດຄົ້ນຄວ້າ, ແຜນພັດທະນາເສດ ຖະກິດ-ສັງຄົມ, ແຜນການນຳໃຊ້ນ້ຳຂອງແຕ່ລະຂະແໜງ ການ ແລະ ອື່ນໆ.

ກິດຈະກຳ 3: ເກັບກຳ ແລະ ສັງລວມບັນດາຜູ້ປະກອບການ ທີ່ໃຫ້ບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ເພື່ອຮັບໃຊ້ໃນການຄຸ້ມຄອງ, ອອກອະນຸຍາດການຂຸດເຈາະ, ການບໍລິການຂຸດເຈາະ ຫຼື ຊີເຈາະນ້ຳໃຕ້ດິນ ແລະ ການອອກອະນຸຍາດນຳໃຊ້ນ້ຳໃຕ້ດິນ.

ກິດຈະກຳ 4: ສ້າງຈຸດຕິດຕາມ ພ້ອມທັງຕິດຕັ້ງເຄື່ອງວັດແທກລະດັບ ແລະ ຄຸນນະພາບນ້ຳໃຕ້ດິນ ໃນເຂດພື້ນທີ່ທີ່ເຫັນວ່າມີຄວາມຈຳເປັນ.

ກິດຈະກຳ 5: ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ລະດັບ ແລະ ຄຸນນະພາບນ້ຳໃຕ້ດິນ ເປັນແຕ່ລະໄລຍະ.

**ຄາດໝາຍ 2.2: ການສ້າງ ແລະ ຄຸ້ມຄອງຖານຂໍ້ມູນ-ຂ່າວສານ ນ້ຳໃຕ້ດິນ**

ກິດຈະກຳ 1: ສ້າງ ແລະ ປັບປຸງແຜນທີ່ ນ້ຳໃຕ້ດິນ.

ກິດຈະກຳ 2: ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນ-ຂ່າວສານ ນ້ຳໃຕ້ດິນ.

ກິດຈະກຳ 3: ເຜີຍແຜ່ ແລະ ແລກປ່ຽນຂໍ້ມູນ-ຂ່າວສານນ້ຳໃຕ້ດິນ ກັບຂະແໜງການ ທີ່ກ່ຽວຂ້ອງ ໃນລະດັບສູນກາງ ແລະ ທ້ອງຖິ່ນ.

**ແຜນງານ 3: ການຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ນ້ຳໃຕ້ດິນ**

**ຄາດໝາຍ 3.1 ຊຸກຍູ້, ສົ່ງເສີມ ການປົກປັກຮັກສາ ແຫຼ່ງນ້ຳໃຕ້ດິນ ແລະ ບໍ່ນ້ຳໃຕ້ດິນ**

ກິດຈະກຳ 1: ກຳນົດເຂດປົກປັກຮັກສາ ແລະ ເຂດສະຫງວນນ້ຳໃຕ້ດິນເຊັ່ນ: ເຂດສະຫງວນເພື່ອການນຳໃຊ້ນ້ຳໃຕ້ດິນ, ເຂດສະຫງວນນ້ຳໃຕ້ດິນ ເພື່ອຊີວະນາໆພັນ, ເຂດສ່ຽງໄພຈາກມົນລະພິດທາງນ້ຳ, ເຂດສະຫງວນນ້ຳໃຕ້ດິນ ເພື່ອຮອງຮັບການຂາດແຄນນ້ຳ.

ກິດຈະກຳ 2: ສ້າງລະບຽບການ ຫຼື ບົດແນະນຳ ໃນການປົກປັກຮັກສາ ນ້ຳໃຕ້ດິນ ແລະ ເຂດສະຫງວນນ້ຳໃຕ້ດິນ.

ກິດຈະກຳ 3: ສົ່ງເສີມການສ້າງຕັ້ງກຸ່ມຜູ້ນຳໃຊ້ ແລະ ປົກປັກຮັກສານ້ຳໃຕ້ດິນໃນຊຸມຊົນ ເພື່ອຟື້ນຟູແຫຼ່ງນ້ຳໃຕ້ດິນ ແລະ ບໍ່ນ້ຳໃຕ້ດິນ.

ກິດຈະກຳ 4: ຊຸກຍູ້ ແລະ ສົ່ງເສີມ ການສ້າງ ບໍ່ນ້ຳໃຕ້ດິນ ຂອງຊຸມຊົນ ແລະ ເຂດທີ່ມີການຂາດແຄນນ້ຳ.

ກິດຈະກຳ 5: ຟື້ນຟູພື້ນທີ່ປ່າໄມ້ ທີ່ຖືກທຳລາຍ ຫຼື ພື້ນທີ່ເສື່ອມໂຊມ.

ກິດຈະກຳ 6: ສົ່ງເສີມການສ້າງກອງທຶນບ້ານ ເພື່ອການປົກປັກຮັກນ້ຳໃຕ້ດິນ.

(ໝາຍເຫດ: ສຳລັບງົບປະມານໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງແຕ່ລະກິດຈະກຳແມ່ນຢູ່ເອກະສານຊ້ອນທ້າຍ)

## VI. ມາດຕະການໃນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ

### 6.1. ອົງການຄຸ້ມຄອງ ແລະ ກວດກາ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງ ປະສານສົມທົບ ພະແນກພະລັງງານ ແລະ ບໍ່ແຮ່, ພະແນກກະສິກຳ ແລະ ປ່າໄມ້, ພະແນກ ໂຍທາທິການ ແລະ ຂົນສົ່ງ , ພະແນກສາທາລະນະສຸກ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິ ບັດແຜນ ຄຸ້ມຄອງນ້ຳໃຕ້ດິນ.

ອົງການຄຸ້ມຄອງ ແລະ ກວດກາ ການຈັດຕັ້ງປະຕິບັດແຜນຄຸ້ມຄອງນ້ຳໃຕ້ດິນ ປະກອບດ້ວຍ:

1. ກົມຊັບພະຍາກອນນ້ຳ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສາລະວັນ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ.

### 6.2. ມາດຕະການໃນການຈັດຕັ້ງປະຕິບັດ

ແຜນຄຸ້ມຄອງນ້ຳໃຕ້ດິນ ແມ່ນການຈັດຕັ້ງປະຕິບັດ ແບບມີສ່ວນຮ່ວມ ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ຕາມຂອບເຂດສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ໂດຍມີການປະສານງານ ແລະ ແລກປ່ຽນຄວາມຮູ້, ປະສົບການ ແລະ ບົດຮຽນໃນການຄຸ້ມຄອງຊັບພະຍາກອນນ້ຳແບບເຊື່ອມສານ ເພື່ອບັນລຸຜົນສຳເລັດ ຢ່າງ ມີປະສິດທິພາບ. ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງແຕ່ລະພາກສ່ວນ ແມ່ນໄດ້ກຳນົດໃນຫຼາຍລະດັບ ດັ່ງລຸ່ມນີ້:

#### 6.2.1 ອົງການຈັດຕັ້ງຂັ້ນສູນກາງ

ອົງການຈັດຕັ້ງຂັ້ນສູນກາງ ແມ່ນອົງການຈັດຕັ້ງຫຼັກ ທີ່ນຳພາ ແລະ ຊີ້ນຳ ໃນການຈັດຕັ້ງປະຕິບັດ ແຜນຄຸ້ມຄອງນ້ຳໃຕ້ດິນ ສະບັບນີ້ ໂດຍມີໜ້າທີ່ຫຼັກ ດັ່ງນີ້:

1. ສ້າງຕັ້ງກົນໄກການຈັດຕັ້ງປະຕິບັດ ເພື່ອສອດຄ່ອງ ແລະ ມີການປະສານງານ ໃນການ ດຳເນີນງານການຄຸ້ມຄອງ ນ້ຳໃຕ້ດິນຂອງສູນກາງ ແລະ ທ້ອງຖິ່ນ;
2. ປັບປຸງບັນດານິຕິກຳ, ລະບຽບການທີ່ຈຳເປັນ ເພື່ອສະໜັບສະໜູນ ໃຫ້ແກ່ການຈັດຕັ້ງປະຕິບັດ ບັນດາກິດຈະກຳ ທີ່ໄດ້ລະບຸໃນແຜນສະບັບນີ້;
3. ປັບປຸງລະບົບການຕິດຕາມກວດກາ ແລະ ປະເມີນຜົນ ເພື່ອປະເມີນຄວາມຄືບໜ້າ ຂອງການ ຈັດຕັ້ງປະຕິບັດ ແລະ ຕີລາຄາຜົນສຳເລັດ ແລະ ຜົນກະທົບ ໃນການຈັດຕັ້ງປະຕິບັດແຜນ;
4. ສ້າງຄວາມເຂັ້ມແຂງ ໃຫ້ອົງການຈັດຕັ້ງທ້ອງຖິ່ນ ໃນການຄຸ້ມຄອງນ້ຳໃຕ້ດິນ;
5. ສະໜັບສະໜູນ ດ້ານວິຊາການ ແລະ ງົບປະມານ ໃຫ້ແກ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ແຜນຄຸ້ມຄອງນ້ຳໃຕ້ດິນ;

### 6.2.2 ອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ກຸ່ມບ້ານ ແລະ ບ້ານ)

1. ສ້າງຕັ້ງກົນໄກປະສານງານ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ເພື່ອຊີ້ນຳການຈັດຕັ້ງປະຕິບັດ ແຜນຄຸ້ມຄອງນໍ້າໃຕ້ດິນ;

2. ຮັບປະກັນການຈັດຕັ້ງປະຕິບັດ ຕາມບັນດາລະບຽບການທີ່ສອດຄ່ອງ ໃຫ້ແກ່ການຈັດຕັ້ງ ປະຕິບັດ ແຜນສະບັບນີ້;

3. ຊີ້ນຳຂະແໜງການທີ່ຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ໃຫ້ບັນລຸຕາມຈຸດປະສົງ ຂອງແຜນສະບັບນີ້;

4. ສ້າງຄູ່ຮ່ວມງານ ກັບ ຜູ້ມີສ່ວນຮ່ວມ ໃນການຄຸ້ມຄອງນໍ້າໃຕ້ດິນ;

5. ສ້າງແຜນງົບປະມານ ເພື່ອຈັດຕັ້ງປະຕິບັດ ແຜນຄຸ້ມຄອງນໍ້າໃຕ້ດິນ;

6. ຜັນຂະຫຍາຍ ແຜນຄຸ້ມຄອງນໍ້າໃຕ້ດິນ ເປັນແຜນສະເພາະ ຂອງທ້ອງຖິ່ນຕົນ;

7. ເຊື່ອມແຜນຄຸ້ມຄອງ ນໍ້າໃຕ້ດິນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ເມືອງ ແລະ ບ້ານ;

8. ຈັດຕັ້ງ ລະບົບການຕິດຕາມກວດກາ ແລະ ປະເມີນຜົນ ເພື່ອປະເມີນຜົນ ຄວາມຄືບໜ້າ, ຜົນສຳເລັດ ແລະ ຜົນກະທົບ ຂອງການຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ ແລະ ລາຍງານ ເປັນປົກກະຕິ.

### 6.2.3 ຊຸມຊົນ

1. ປົກປັກຮັກສາສະພາບແວດລ້ອມ ແລະ ຫຼີກລ່ຽງການສ້າງຜົນກະທົບຕໍ່ ນໍ້າໃຕ້ດິນ, ແຫຼ່ງນໍ້າໜ້າດິນ ແລະ ສິ່ງແວດ ລ້ອມທົ່ວໄປ ເພື່ອປົກປັກຮັກສາລະບົບ ແລະ ວົງຈອນຂອງນໍ້າໃຕ້ດິນ;

2. ສະໜັບສະໜູນ ແລະ ເຂົ້າຮ່ວມໃນບັນດາກິດຈະກຳ ໃນການຈັດຕັ້ງປະຕິບັດ ແຜນຄຸ້ມຄອງນໍ້າໃຕ້ດິນ ໃນທ້ອງຖິ່ນຂອງຕົນ;

3. ຈັດຕັ້ງບັນດາກິດຈະກຳ ໃນການປູກຈິດສຳນຶກໃນເຂດຊຸມຊົນ ເຊັ່ນ: ປູກຕົ້ນໄມ້, ອະນາໄມ ບໍລິເວນບໍ່ນໍ້າໃຕ້ດິນ ແລະ ແຫຼ່ງນໍ້າໃຕ້ດິນ.

## 6.3 ການຕິດຕາມກວດກາ

ການຕິດຕາມກວດກາແມ່ນເພື່ອປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແລະ ຮັບປະກັນການປະຕິບັດວຽກງານ ແລະ ໝາກຜົນໃຫ້ບັນລຸຕາມວິໄສທັດຈະຕ້ອງໄດ້ກຳນົດຕົວຊີ້ວັດທີ່ເປັນລະບົບ ໃຫ້ແກ່ຜູ້ມີສ່ວນຮ່ວມເພື່ອເປັນເກນໃນການດຳເນີນການຈັດຕັ້ງປະຕິບັດ, ທຸກພາກສ່ວນເປັນເຈົ້າການໃນການຕິດຕາມກວດກາການຈັດ ຕັ້ງປະຕິບັດແຜນ ແລະ ມີສ່ວນຮ່ວມເຂົ້າໃນການປັບປຸງ, ທົບທວນແຜນສະບັບນີ້. ການປະເມີນການຈັດຕັ້ງປະຕິບັດ ແລະ ການປັບປຸງແຜນ ແມ່ນດຳເນີນທຸກໆປີ, ກາງສະໄໝ (2,5 ປີ), ແລະ ທຸກໆ 5 ປີ.

## 6.4 ບັນດາຕົວຊີ້ວັດການປະເມີນຜົນການຈັດຕັ້ງປະຕິບັດ

ຕົວຊີ້ວັດການປະເມີນຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ ແຂວງ ສາລະວັນ ປະກອບມີ 3 ແຜນງານ, 5 ຄາດໝາຍ ແລະ 20 ກິດຈະກຳ ທີ່ເປັນຄວາມຮັບຜິດຊອບຂອງບັນດາຂະແໜງການທີ່ກ່ຽວຂ້ອງ. ບັນດາຕົວຊີ້ວັດ ລະອຽດສະແດງອອກ ໃນຕາຕະລາງລຸ່ມນີ້:

ຕາຕະລາງ15 : ຕົວຊີ້ວັດການປະເມີນຜົນການຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ

| ລ/ດ | ແຜນງານ/ຄາດໝາຍ | ຂໍ້ມູນ ພື້ນຖານ | ປີທີ 1 | ປີທີ 2 | ປີທີ 3 | ປີທີ 4 | ປີທີ 5 | ພາກ ສ່ວນ ຮັບຜິດຊອບຫຼັກ | ພາກ ສ່ວນຜູ້ ມີສ່ວນຮ່ວມ |
|---|---|---|---|---|---|---|---|---|---|
| I | ແຜນງານ 1: ການສ້າງຄວາມເຂັ້ມແຂງ ແລະ ສົ່ງເສີມ ການມີສ່ວນຮ່ວມ ໃນການຄຸ້ມຄອງນໍ້າໃຕ້ດິນ | | | | | | | | |
| 1.1 | ຄາດໝາຍ 1.1 ການສ້າງຄວາມເຂັ້ມແຂງທາງດ້ານກົນໄກການຄຸ້ມຄອງ ແລະ ບຸກຄະລາກອນ ໃນການຄຸ້ມຄອງນໍ້າໃຕ້ດິນ | | | | | | | ກຊນ, ພຊສ ແລະ ຫຊສ | ທຸກຂະແໜງການທີ່ກ່ຽວຂ້ອງ |
| 1.2 | ຄາດໝາຍ 1.2 ການສົ່ງເສີມການມີສ່ວນຮ່ວມ ແລະ ການສ້າງຈິດສຳນຶກໃນການຄຸ້ມຄອງນໍ້າໃຕ້ດິນ | | | | | | | ກຊນ, ພຊສ, ຫຊສ ແລະ ອຳນາດ ການປົກຄອງທ້ອງຖິ່ນ | ທຸກຂະແໜງການທີ່ກ່ຽວຂ້ອງ |
| II | ແຜນງານ 2: ການເກັບກຳຂໍ້ມູນ ແລະ ສ້າງຖານຂໍ້ມູນ-ຂ່າວສານ ນໍ້າໃຕ້ດິນ | | | | | | | | |
| 2.1 | ຄາດໝາຍ 2.1: ການສຳຫຼວດ ແລະ ເກັບກຳຂໍ້ມູນ-ຂ່າວສານ ກ່ຽວກັບນໍ້າໃຕ້ດິນ | | | | | | | ກຊນ, ພຊສ ແລະ ຫຊສ | ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ |
| 2.2 | ຄາດໝາຍ 2.2: ການສ້າງ ແລະ ຄຸ້ມຄອງຖານຂໍ້ມູນ-ຂ່າວສານ ນໍ້າໃຕ້ດິນ | | | | | | | ກຊນ ແລະ ພຊສ | ຫຊສ ແລະ ພາກສ່ວນທີ່ກ່ຽວຂ້ອງ |
| III | ແຜນງານ 3: ການຟື້ນຟູ, ປົກປັກຮັກສາ ແລະ ພັດທະນາ ນໍ້າໃຕ້ດິນ | | | | | | | | |
| 3.1 | ຄາດໝາຍ 3.1 ຊຸກຍູ້, ສົ່ງເສີມການປົກປັກຮັກສາ ແຫຼ່ງນໍ້າໃຕ້ດິນ ແລະ ບໍ່ນໍ້າໃຕ້ດິນ | | | | | | | ກຊນ, ພຊສ ແລະ ຫຊສ | ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງ ທ້ອງຖິ່ນ |

ຕາຕະລາງ 16: ແຜນງົບປະມານທີ່ຈະໃຊ້ເຂົ້າໃນການຈັດຕັ້ງປະຕິບັດແຜນຄຸ້ມຄອງນໍ້າໃຕ້ດິນ

| ລ/ດ | ແຜນງານ, ຄາດໝາຍ, ແລະ ກິດຈະກໍາ | ງົບປະມານ (ກີບ) | ແຫຼ່ງງົບປະມານ |
|---|---|---|---|
